ສຽງຂອງສະພາແຫ່ງຊາດ
# ຜູ້ແທນປະຊາຊົນ
PHOUTHEN PASAXON
ລາຍສັບປະດາ
9 ມັງກອນ 2023
ປີທີ 11
ສະບັບທີ 904
ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ ໂທ. 021 840 430 E-mail: phouthen.na@gmail.com: www.na.gov.la; App: Lao na

# ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ສະໄໝວິສາມັນປະຈຳເດືອນມັງກອນ 2023





(ສພຊ) ປະຕິບັດຕາມກົດໝາຍວ່າດ້ວຍສະພາແຫ່ງຊາດມາດຕາ 67 ກ່ຽວກັບກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ໃນລະຫວ່າງວັນທີ 3 ມັງກອນຜ່ານມາ ຄະນະປະຈຳສະພາແຫ່ງຊາດ ໄດ້ດຳເນີນກອງປະຊຸມສະໄໝວິສາມັນປະຈຳເດືອນມັງກອນ 2023 ຂອງຕົນຂຶ້ນ ຢູ່ທີ່ຫ້ອງປະຊຸມຄະນະປະຈຳສະພາແຫ່ງຊາດ ໂດຍການ **ເປັນປະທານຂອງທ່ານ ປອ. ໄຊສົມພອນ** ພົມວິຫານ ກຳມະການກົມການເມືອງສູນກາງພັກ ປະທານຄະນະປະຈຳສະພາແຫ່ງຊາດ, ເຂົ້າຮ່ວມກອງປະຊຸມດັ່ງກ່າວ ມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ, ກຳມະການຄະນະປະຈຳສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ກອງປະຊຸມຄະນະປະຈຳສະພາແຫ່ງຊາດປະຈຳເດືອນມັງກອນ 2023 ໄດ້ຮັບຟັງການລາຍງານການສະຫຼຸບຕີລາຄາຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX, ລາຍງານການກະກຽມໃຫ້ແກ່ກອງປະຊຸມລັດຖະສະພາ 3 ປະເທດ ກຳປູເຈຍ-ລາວ-ຫວຽດນາມ (CLV), ລາຍງານແຜນການຮຽບຮຽງກົດໝາຍ 12 ສະບັບທີ່ຜ່ານການພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX, ລາຍງານການກະກຽມແຜນການຈັດຕັ້ງທາບທາມຮ່າງກົດໝາຍຈຳນວນ 13 ສະບັບ ທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IX ຢູ່ບັນດາເຂດເລືອກຕັ້ງທົ່ວປະເທດ ແລະ ວຽກງານອື່ນໆຈຳນວນໜຶ່ງຈາກຄະນະເລຂາທິການສະພາແຫ່ງຊາດ ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ກຳມາທິການການຕ່າງປະເທດ ແລະ ກຳມາທິການກົດໝາຍ. ພ້ອມນັ້ນ, ບັນດາທ່ານທີ່ເຂົ້າ ຍັງໄດ້ຄົ້ນຄວ້າ ແລະ ພິຈາລະນາປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ເຮັດໃຫ້ບົດລາຍງານຕ່າງໆມີເນື້ອໃນຄົບຖ້ວນຍິ່ງຂຶ້ນ.

## ສພຊ ປາຖະກະຖາ ແລະ ເຊື່ອມຊຶມເອກະສານສຳຄັນຂອງພັກຂອງຊາດ



(ສພຊ) ເພື່ອເຮັດໃຫ້ສະມາຊິກພັກ ພະນັກງານ-ລັດຖະກອນ ພາຍໃນສະພາແຫ່ງຊາດ ມີຄວາມຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ຕໍ່ແນວທາງນະໂຍບາຍຂອງພັກ ທີ່ກຳນົດອອກໃນກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແນໃສ່ການຜັນຂະຫຍາຍເຂົ້າສູ່ການຈັດຕັ້ງປະຕິບັດໃຫ້ກາຍເປັນຂະບວນການອັນກວ້າງຂວາງຂອງມະຫາຊົນ, ເຮັດໃຫ້ແນວທາງການປ່ຽນແປງໃໝ່ຂອງພັກສືບຕໍ່ດຳເນີນໄປຢ່າງເລິກເຊິ່ງ, ຮອບດ້ານ ແລະ ມີຜົນສຳເລັດໃຫຍ່ຫຼວງກວ່າເກົ່າ ນຳເອົາຜົນປະໂຫຍດຕົວຈິງມາໃຫ້ປະເທດຊາດ ແລະ ປະຊາຊົນບັນດາເຜົ່າ; ເພື່ອເປັນການຮຽນຮູ້ ແລະ ລະນຶກເຖິງຄຸນງາມຄວາມດີ, ຜົນງານອັນຍິ່ງໃຫຍ່ຂອງນັກຮົບປະຕິວັດ ເປັນພື້ນຖານໃນການເສີມສ້າງຄຸນທາດການເມືອງ, ມູນເຊື້ອຄວາມສາມັກຄີຂອງປະຊາຊົນລາວບັນດາເຜົ່າ, ປູກລະດົມນ້ຳໃຈຮັກຊາດຮັກລະບອບໃໝ່, ເປັນເຈົ້າຕົນເອງ, ເຊີດຊູບົດບາດການນຳພາຂອງພັກ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ແລະ ເພື່ອລະນຶກສະແດງຄວາມຮູ້ບຸນຄຸນຕໍ່ຜົນງານ ແລະ ຄຸນງາມຄວາມດີອັນໃຫຍ່ຫຼວງຂອງຜູ້ນຳ ແລະ ນັກຮົບວິລະຊົນຜູ້ທີ່ເສຍສະຫຼະຕໍ່ສູ້ເພື່ອປະເທດຊາດ; ໃນຕອນເຊົ້າຂອງວັນທີ 5 ມັງກອນ 2023 ທີ່ສະພາແຫ່ງຊາດ ໄດ້ຈັດ**ກອງປະຊຸມເຜີຍແຜ່ເຊື່ອມຊຶມເອກະສານສຳຄັນຕ່າງໆຂອງພັກຂອງຊາດ ແລະ ການທາບທາມບຸກຄະລາກອນ ຮອບທີ 2 ພາຍໃນສະພາແຫ່ງຊາດ** ໂດຍການເຂົ້າຮ່ວມ ແລະ ປາຖະກະຖາ ( ອ່ານຕໍ່ໜ້າ 11 )



## ບົດ ຖະແຫຼງ

**ບັນດາທ່ານຜູ້ອ່ານທີ່ຮັກແພງ.**

ໜັງສືພິມ " **ຜູ້ແທນປະຊາຊົນ** " ສະບັບທີ 904 ປະຈຳເດືອນມັງກອນ 2023 ໄດ້ຈັດພິມເປັນລາຍອາທິດສະບັບທຳອິດ ຈາກລາຍ 2 ສະບັບຕໍ່ອາທິດໃນໄລຍະຜ່ານມາ ໂດຍອີງຕາມການຊີ້ນຳຂອງຄະນະປະຈຳສະພາແຫ່ງຊາດ. ການສະໜອງຂໍ້ມູນໃນຮູບແບບນີ້ ແມ່ນເພື່ອປັບປຸງເນື້ອໃນ ແລະ ຮູບການຂອງການສະໜອງຂໍ້ມູນຂ່າວສານ ພາຍໃຕ້ການນຳພາ-ຊີ້ນຳຂອງ ຄະນະປະຈຳສະພາແຫ່ງຊາດ, ( ອ່ານຕໍ່ໜ້າ 10 )

## ພິທີມອບ-ຮັບ ໂຄງການປຸກສ້າງຕຶກສະພາປະຊາຊົນແຂວງໄຊສົມບູນ

(ສພຊ) ໂດຍອີງຕາມມະຕິວ່າດ້ວຍການມອບ-ໂອນໂຄງການປຸກສ້າງຕຶກສະພາປະຊາຊົນແຂວງໄຊສົມບູນ ໄປຂຶ້ນກັບແຜນການລົງທຶນຂອງແຂວງສະບັບເລກທີ 90/ຄປຈ, ລົງວັນທີ 19 ທັນວາ 2022; ໃນວັນທີ 28 ທັນວາ 2022, ທີ່ຫ້ອງປະຊຸມຂອງສະພາແຫ່ງຊາດຫຼັງໃໝ່ ໄດ້ຈັດພິທີມອບ-ຮັບໂຄງການປຸກສ້າງຕຶກສະພາປະຊາຊົນແຂວງໄຊສົມບູນ ທີ່ນອນຢູ່ໃນແຜນການລົງທຶນຂອງລັດຂອງສະພາແຫ່ງຊາດໃນໄລຍະຜ່ານມາ ໄປຂຶ້ນກັບແຜນການລົງທຶນຂອງແຂວງໄຊສົມບູນ ນັບແຕ່ປີ 2023 ເປັນຕົ້ນໄປ ລະຫວ່າງຄະນະເລຂາທິການສະພາແຫ່ງຊາດ



ແລະ ອົງການປົກຄອງແຂວງໄຊສົມບູນ ເຊິ່ງຕາງໜ້າສະພາແຫ່ງຊາດ **ມອບໂດຍທ່ານ ປອ. ບຸນທັນ ບຸນວິໄລ ຮອງເລຂາທິການສະພາແຫ່ງຊາດ, ຮອງຫົວໜ້າຄະນະຮັບຜິດຊອບ ມອບ-ໂອນ ໂຄງການຂອງສະພາແຫ່ງຊາດ** ໃຫ້ອົງການປົກຄອງແຂວງໄຊສົມບູນ ສືບຕໍ່ຈັດຕັ້ງປະຕິບັດໂຄງການ ເຊິ່ງຮັບໂດຍ**ທ່ານ ສຸກສະຫວາດ ວົງພູມເຫຼັກ ຮອງເຈົ້າແຂວງໄຊສົມບູນ ຫົວໜ້າຄະນະຮັບຜິດຊອບມອບ-ໂອນ ໂຄງການຂັ້ນແຂວງ**, ເຂົ້າຮ່ວມພິທີໃນຄັ້ງນີ້ ມີ**ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ** ( ອ່ານຕໍ່ໜ້າ 2 )


ໜ້າ 2


ໜ້າ 6


ໜ້າ 8


ໜ້າ 9


ໜ້າ 11

# ຄະນະສະມາຊິກສະພາແຫ່ງຊາດໜຸ່ມຂອງສະພາແຫ່ງຊາດ ສສ ຫວຽດນາມ ຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ



**(ສພຊ) ເພື່ອພົບປະແລກປ່ຽນບົດຮຽນ ລະຫວ່າງສະມາຊິກສະພາແຫ່ງຊາດໜຸ່ມ ຂອງສະພາແຫ່ງຊາດແຫ່ງ ສປປ ລາວ ແລະ ສະມາຊິກສະພາແຫ່ງຊາດໜຸ່ມ ຂອງສະພາແຫ່ງຊາດ ແຫ່ງ ສສ ຫວຽດນາມ, ທັງເປັນກິດຈະກຳສະເຫຼີມສະຫຼອງປີສາມັກຄີມິດຕະພາບລາວ-ຫວຽດນາມ-ລາວ ປີ 2022 ຂອງສອງສະພາແຫ່ງຊາດລາວ-ຫວຽດນາມ. ຄະນະຜູ້ແທນສະມາຊິກສະພາແຫ່ງຊາດຫວຽດນາມ ນຳໂດຍສະຫາຍ ດິງ ກົງ ສີ ຮອງປະທານກຳມາທິການວັດທະນະທຳ-ສຶກສາ, ຮອງປະທານຜູ້ປະຈຳການຄະນະສະມາຊິກສະພາແຫ່ງຊາດໜຸ່ມ ຂອງສະພາແຫ່ງຊາດຫວຽດນາມ ຊຸດທີ XV ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ໃນລະຫວ່າງວັນທີ 23-27 ທັນວາ 2022.**

ໃນວັນທີ 23 ທັນວາ 2022 ຄະນະສະມາຊິກສະພາແຫ່ງຊາດໜຸ່ມຫວຽດນາມ ນຳໂດຍສະຫາຍ ດິງ ກົ້ງ ສີ ພ້ອມດ້ວຍຄະນະ ໄດ້ພົບປະ ແລະ ເຮັດວຽກກັບສະຫາຍ ແກ້ວຈະເລີນ ເຊຍຢັ້ງຢ່າງ ຮອງປະທານກຳມາທິການບັນດາເຜົ່າ ພ້ອມດ້ວຍຄະນະສະມາຊິກສະພາແຫ່ງຊາດໜຸ່ມ ຂອງສະພາແຫ່ງຊາດລາວ ດ້ວຍບັນຍາກາດສະໜິດສະໜົມເປັນກັນເອງ ດ້ວຍໄມຕີຈິດຖານອ້າຍນ້ອງ. ສອງຝ່າຍໄດ້ແລກປ່ຽນຄຳຄິດຄຳເຫັນ ແລະ ບົດຮຽນນຳກັນ ກ່ຽວກັບການເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະເທດຊາດ ແລະ ປະຊາຊົນບັນດາເຜົ່າ; ບົດຮຽນໃນການປະຕິບັດສິດ, ໜ້າທີ່, ພາລະບົດບາດ ແລະ ການເຄື່ອນໄຫວຂອງສະມາຊິກສະພາແຫ່ງຊາດໜຸ່ມ, ບົດຮຽນ ແລະ ປະສົບການໃນການເຄື່ອນໄຫວວຽກງານຢູ່ເວທີລັດຖະສະພາພາກພື້ນ ແລະ ສາກົນ ເປັນຕົ້ນ AIPA, IPU, APPF ແລະ ອົງການອື່ນໆຂອງສະມາຊິກສະພາແຫ່ງຊາດໜຸ່ມ. ສອງຝ່າຍໄດ້ເປັນເອກະພາບກັນຕໍ່ກັບທິດທາງແຜນການຮ່ວມມືໃນຕໍ່ໜ້າ ເປັນຕົ້ນ ສືບຕໍ່ແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນໃນຂັ້ນຕ່າງໆຂອງສອງສະພາແຫ່ງຊາດ ລາວ-ຫວຽດນາມ, ການປະກອບສ່ວນຮັດແໜ້ນການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດ ກໍຄືສືບຕໍ່ຈັດຕັ້ງປະຕິບັດບົດບັນທຶກການຮ່ວມມື ທີ່ໄດ້ລົງນາມຮ່ວມກັນລະຫວ່າງສອງສະພາແຫ່ງຊາດຂອງສອງປະເທດ.

ໃນວັນດຽວກັນ, ສະຫາຍ ດິງ ກົງ ສີ ພ້ອມດ້ວຍຄະນະ ໄດ້ເຂົ້າຢ້ຽມຄຳນັບສະຫາຍ ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດລາວ ດ້ວຍບັນຍາກາດອົບອຸ່ນ ເຕັມໄປດ້ວຍໄມຕີຈິດມິດຕະພາບຖານສະຫາຍອ້າຍນ້ອງ, ສະຫາຍ ດິງ ກົງ ສີ ໄດ້ສະແດງຄວາມຂອບໃຈທີ່ສະຫາຍຮອງປະທານສະພາແຫ່ງຊາດລາວໄດ້ໃຫ້ການຕ້ອນຮັບໃນຄັ້ງນີ້, ພ້ອມທັງໄດ້ລາຍງານຜົນການພົບປະເຮັດວຽກກັບຄະນະສະມາຊິກສະພາແຫ່ງຊາດໜຸ່ມຂອງສະພາແຫ່ງຊາດລາວ ດ້ວຍຜົນສຳເລັດອັນຈົບງາມ. ສະຫາຍຮອງປະທານສະພາແຫ່ງຊາດລາວ ຕີລາຄາສູງຕໍ່ການມາຢ້ຽມຢາມ ສປປ ລາວ ຂອງສະຫາຍ ດິງ ກົງ ສີ ແລະ ຄະນະ, ທັງເປັນການສະເຫຼີມສະຫຼອງປີສາມັກຄີມິດຕະພາບຂອງສອງຊາດ ລາວ-ຫວຽດ-ລາວ ປີ 2022, ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳເລັດການພົບປະເຮັດວຽກລະຫວ່າງສອງຄະນະສະມາຊິກສະພາແຫ່ງຊາດໜຸ່ມ ຂອງສອງສະພາແຫ່ງຊາດລາວ ແລະ ຫວຽດນາມ, ພ້ອມທັງໃຫ້ທິດຊີ້ນຳຕໍ່ສອງຄະນະສະມາຊິກສະພາແຫ່ງຊາດໜຸ່ມ ລາວ-ຫວຽດນາມ ສືບຕໍ່ພົວພັນຮ່ວມມື ແລະ ຊ່ວຍເຫຼືອເຊິ່ງກັນແລະກັນ ໃນການເຄື່ອນໄຫວວຽກງານທັງໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ກໍຄືການປະກອບສ່ວນຮັດແໜ້ນສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ, ຫວຽດນາມ-ລາວ ເວົ້າລວມ, ເວົ້າສະເພາະ ລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ ໃຫ້ເຂົ້າສູ່ລວງເລິກ ແລະ ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງປະເທດ.

ໂອກາດຢ້ຽມຢາມ ສປປ ລາວ ໃນຄັ້ງນີ້, ສະຫາຍ ດິງ ກົງ ສີ ແລະ ຄະນະ ຍັງໄດ້ເຂົ້າຢ້ຽມຄຳນັບສະຫາຍເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ເດີນທາງຢ້ຽມຢາມ ແລະ ເຮັດວຽກຮ່ວມກັບສະມາຊິກສະພາປະຊາຊົນໜຸ່ມແຂວງຊຽງຂວາງ ແລະ ສະມາຊິກສະພາປະຊາຊົນແຂວງວຽງຈັນ, ຢ້ຽມຢາມບັນດາໂຄງການ, ພື້ນຖານເສດຖະກິດ, ແຫຼ່ງທ່ອງທ່ຽວທາງທຳມະຊາດ ແລະ ວັດທະນະທຳ ຈຳນວນໜຶ່ງຢູ່ນະຄອນຫຼວງວຽງຈັນ, ແຂວງຊຽງຂວາງ ແລະ ແຂວງວຽງຈັນ.

**(ຂ່າວ: ອານຸສອນ ພູມີທອນ; ພາບ: ສອນສັກ ວັນວິໄຊ)**

## ພິທີມອບ-ຮັບ...

( ຕໍ່ຈາກໜ້າ 1 )

ມີເລຂາທິການສະພາແຫ່ງຊາດສະພາປະຊາຊົນແຂວງໄຊສົມບູນ, ບັນດາທ່ານຄະນະຮັບຜິດຊອບມອບ-ໂອນໂຄງການຂອງສະພາແຫ່ງຊາດ ຈາກບັນດາກົມ ເຊິ່ງປະກອບມີກົມບໍລິຫານ-ພິທີການສະພາແຫ່ງຊາດ, ກົມການເງິນສະພາແຫ່ງຊາດ, ຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດຫຼັງໃໝ່, ກົມເຄຫາ ແລະ ຜັງເມືອງ ກະຊວງໂຍທາທິການ ແລະ ຂົນສົ່ງ, ກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ, ກົມແຜນການ ກະຊວງແຜນການ ແລະ ການລົງທຶນ; ຄະນະຮັບຜິດຊອບ ມອບ-ໂອນ ໂຄງການຂັ້ນແຂວງໄຊສົມບູນ ປະກອບຈາກຫ້ອງວ່າການປົກຄອງແຂວງ, ອົງການກວດກາລັດແຂວງ, ພະແນກແຜນການ ແລະ ການລົງທຶນແຂວງ, ພະແນກໂຍທາທິການແຂວງ ພະແນກການເງິນແຂວງ ແລະ ພະນັກງານວິຊາການຈາກພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ຈຸດປະສົງຂອງການ ມອບ-ໂອນ ໂຄງການປຸກສ້າງຕຶກສະພາປະຊາຊົນແຂວງໄຊສົມບູນ ໄປຂຶ້ນກັບແຜນການລົງທຶນຂອງແຂວງໃນຄັ້ງນີ້ ແມ່ນອີງຕາມການຕົກລົງເຫັນດີຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຄັ້ງວັນທີ 26 ກໍລະກົດ 2022 ກ່ຽວກັບການຄຸ້ມຄອງໂຄງການລົງທຶນຂອງລັດຂອງສະພາແຫ່ງຊາດ ທີ່ຕັ້ງຢູ່ເຂດເລືອກຕັ້ງໃຫ້ເຂົ້າສູ່ລະບົບຂາດຕົວ, ຫຼຸດຜ່ອນຂອດຂັ້ນ, ການພິຈາລະນາຕົກລົງບັນຫາຕ່າງໆທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດໂຄງການ ເຮັດໃຫ້ໂຄງການສາມາດດຳເນີນຕາມແຜນການທີ່ກຳນົດໄວ້, ຈຶ່ງໄດ້ມອບ-ໂອນໂຄງການປຸກສ້າງຕຶກສະພາປະຊາຊົນແຂວງໄຊສົມບູນ ທີ່ນອນຢູ່ໃນແຜນການລົງທຶນຂອງລັດຂອງສະພາແຫ່ງຊາດ ເຊິ່ງລວມມີ: ລະຫັດໂຄງການ ແລະ ສາລະບານງົບປະມານໄປຂຶ້ນກັບແຜນການລົງທຶນຂອງແຂວງເປັນຜູ້ຄຸ້ມຄອງ ນັບແຕ່ປີ 2023 ເປັນຕົ້ນໄປ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**




**ຄັດໂດຍ: ທອມສະນິດ**

ໃນປີ 2022 ມີຄະດີເຂົ້າມາຫາສານປະຊາຊົນສູງສຸດ ຄະດີອາຍາ ຄ້າງ 41 ເລື່ອງ ເຂົ້າໃໝ່ 121 ເລື່ອງ ລວມ 162 ເລື່ອງ ແກ້ໄຂ 109 ເລື່ອງ ຍັງຄ້າງ 53 ເລື່ອງ; ຄະດີແພ່ງ ຄ້າງ 103 ເລື່ອງ ເຂົ້າໃໝ່ 135 ເລື່ອງ ລວມ 238 ເລື່ອງ ແກ້ໄຂ 101 ເລື່ອງ ຍັງຄ້າງ 137 ເລື່ອງ; ຄະດີການຄ້າ ຄ້າງ 51 ເລື່ອງ ເຂົ້າໃໝ່ 59 ເລື່ອງ ລວມ 110 ເລື່ອງ ແກ້ໄຂ 35 ເລື່ອງ ຍັງຄ້າງ 75 ເລື່ອງ ຄະດີຄອບຄົວຄ້າງມາ 9 ເລື່ອງເຂົ້າໃໝ່ 16 ເລື່ອງ ລວມ 25 ເລື່ອງ ແກ້ໄຂ 11 ເລື່ອງ ຍັງຄ້າງ 14 ເລື່ອງ; ຄະດີເດັກ ຄ້າງ 0 ເລື່ອງ ເຂົ້າໃໝ່ 3 ເລື່ອງ ລວມ 3 ເລື່ອງ ແກ້ໄຂ 1 ເລື່ອງ ຍັງຄ້າງ 2 ເລື່ອງ ແລະ ຄະດີແຮງງານ ຄ້າງ 1 ເລື່ອງ ເຂົ້າໃໝ່ 2 ເລື່ອງ ລວມ 3 ເລື່ອງ ແກ້ໄຂ 1 ເລື່ອງ ຍັງຄ້າງ 2 ເລື່ອງ.

**ນສພ. ວຽງຈັນໃໝ່ 03/01/2023**

ສະຖິຕິການເກີດອຸບັດເຫດທົ່ວປະເທດ ໃນໄລຍະ 5 ວັນ (ວັນທີ 29 ທັນວາ 2022 ຫາ 2 ມັງກອນ 2023)ການສະເຫຼີມສະຫຼອງສົ່ງທ້າຍປີເກົ່າ ຕ້ອນຮັບປີໃໝ່ສາກົນ 2023: ທົ່ວປະເທດມີອຸບັດເຫດເກີດຂຶ້ນທັງໝົດ 190 ລາຍ ທຽບໃສ່ໄລຍະດຽວກັນໃນປີຜ່ານມາ ຫຼຸດລົງ 7 ລາຍ ເທົ່າກັບ 3,55%, ພາຫະນະເປ່ເພ323 ຄັນ ເພີ່ມຂຶ້ນ 8 ຄັນ ເທົ່າກັບ 2,53%, ຄົນໄດ້ຮັບບາດເຈັບ 311 ຄົນ ເພີ່ມຂຶ້ນ 14 ຄົນ ເທົ່າກັບ 4,71% ແລະ ເສຍຊີວິດ 26 ຄົນ, ໃນນັ້ນຄົນຕ່າງປະເທດ2 ຄົນ, ຫຼຸດລົງ 17 ຄົນ ເທົ່າກັບ 39,25%, ອຸບັດເຫດທີ່ເກີດຂຶ້ນຫຼາຍກວ່າໝູ່ ແມ່ນນະຄອນຫຼວງວຽງຈັນ ມີອຸບັດເຫດເກີດຂຶ້ນ 26 ລາຍ, ຫຼຸດລົງ 3 ລາຍ ເທົ່າກັບ 10,34%, ພາຫະນະເປ່ເພ 57 ຄັນ ເພີ່ມຂຶ້ນ 4 ຄັນ ເທົ່າກັບ 7,54%, ຄົນໄດ້ຮັບບາດເຈັບ 33 ຄົນ, ຫຼຸດລົງ 6 ຄົນ ເທົ່າກັບ 15,38%, ເສຍຊີວິດ 5 ຄົນ, ຫຼຸດລົງ 1 ຄົນ ເທົ່າກັບ 16,66%, ແຂວງສະຫວັນນະເຂດ 22 ລາຍ, ຫຼວງພະບາງ 19 ລາຍ, ສາເຫດການເກີດອຸບັດເຫດ ແມ່ນມາຈາກການດື່ມສິ່ງມຶນເມົາແລ້ວຂັບຂີ່, ຂັບຂີ່ລົດໄວເກີນຂອບເຂດ, ບໍ່ປ່ອຍສິດໃຫ້ລົດຄັນອື່ນ, ປ່ຽນທິດທາງລົດກະທັນຫັນ, ເຊິ່ງບໍ່ຮັບປະກັນ, ຂັບຂີ່ລົດຈັກບໍ່ໃສ່ໝວກກັນກະທົບ, ເຕັກນິກລົດ, ສະພາບເສັ້ນທາງ, ລ່ວງໄຟແດງ ແລະ ບໍ່ປະຕິບັດກົດລະບຽບຈະລາຈອນທາງບົກອື່ນໆ.

**ນສພ. ປະຊາຊົນ 04/01/2023**

ໃນ 1 ປີຜ່ານມາ, ນັກໂທດຜູ້ຖືກກັດສ້າງ ໄດ້ຮັບນະໂຍບາຍອະໄພຍະໂທດ, ຜ່ອນໂທດ ແລະ ປ່ອຍຕົວປະຈຳປີ 2022 ທົ່ວປະເທດ ຈຳນວນ 1.992 ຄົນ ຍິງ 280 ຄົນ; ໃນນີ້, ລວມມີອະໄພຍະໂທດຫຼຸດຜ່ອນໂທດປະຫານຊີວິດລົງມາຕະຫຼອດຊີວິດມີ 25 ຄົນ ຍິງ 4 ຄົນ, ອະໄພຍະໂທດ, ຜ່ອນໂທດໃຫ້ນັກໂທດຕະຫຼອດຊີວິດ ຈຳນວນ 17 ຄົນ ຍິງ 6 ຄົນ, ອະໄພຍະໂທດ, ປ່ອຍຕົວປະຈຳປີ ຈຳນວນ 361 ຄົນ ຍິງ 58 ຄົນ, ປ່ອຍຕົວກ່ອນກຳນົດໂດຍມີເງື່ອນໄຂຕາມກົດໝາຍ ຈຳນວນ 215 ຄົນ ຍິງ 31 ຄົນ ປ່ອຍຕົວນັກໂທດໃນໄລຍະປະຕິບັດມາດຕະການຕ້ານໂຄວິດ-19 ຈຳນວນ 584 ຍິງ 89 ຄົນ; ນອກນີ້, ຍັງໄດ້ປ່ອຍຕົວນັກໂທດທີ່ປະຕິບັດໂທດຄົບຕາມຄຳຕັດສິນຂອງສານ ຈຳນວນ 1.514 ຄົນ ຍິງ 89 ຄົນ, ປ່ອຍຕົວຜູ້ຖືກກັດສ້າງ ຈຳນວນ 1.056 ຄົນ ຍິງ 25 ຄົນ.

**ນສພ. ຄວາມສະຫງົບ 04/01/2023**

# ໄລຍະຜ່ານມາ ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສາມາດຍາດໄດ້ຜົນງານເດັ່ນຫຼາຍດ້ານ



**(ສພຊ) ທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ປະທານກຳມາທິການເສດຖະກິດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດ ໄດ້ໃຫ້ສຳພາດແກ່ສື່ມວນຊົນ ໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃນວັນທີ 14 ທັນວາ 2022 ໂດຍທ່ານໄດ້ໃຫ້ຮູ້ກ່ຽວກັບສະພາບລວມຂອງກຳມາທິການ ເຊິ່ງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ມີພາລະບົດບາດເປັນເສນາທິການໃຫ້ແກ່ສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ປະຕິບັດ 3 ພາລະບົດບາດ ຄື: ສ້າງ, ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ, ຄົ້ນຄວ້າບັນຫາສຳຄັນພື້ນຖານຂອງປະເທດຊາດ, ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ; ຄົ້ນຄວ້າປະກອບຄຳເຫັນກ່ຽວກັບການໃຫ້ສັດຕະຍາບັນແກ່ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ແລະ ຄຳສະເໜີຂອງປະຊາຊົນ.**

ກຳມາທິການ ລົງເລິກໃນ 6 ຂົງເຂດຫຼັກຄື: ກະສິກຳ ແລະ ປ່າໄມ້, ອຸດສາຫະກຳ ແລະ ການຄ້າ, ໂຍທາທິການ ແລະ ຂົນສົ່ງ, ເຕັກໂນໂລຊີ ແລະ ການສື່ສານ, ພະລັງງານ ແລະ ບໍ່ແຮ່, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ເຂດເສດຖະກິດພິເສດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຫຼືຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ.

ກຳມາທິການ ມີກົງຈັກຊ່ວຍວຽກ 3 ກົມ, 6 ພະແນກ ແລະ ໂຄງປະກອບດ້ານບຸກຄະລາກອນ ປະກອບມີປະທານ 1 ທ່ານ ຮອງປະທານກຳມາທິການ 3 ທ່ານ, ພະນັກງານທັງໝົດ 43 ທ່ານ (ຍິງ 17 ທ່ານ). ນອກຈາກນັ້ນ, ຍັງມີ ສສຊ ທີ່ເປັນກຳມະການທີ່ສັງກັດກຳມາທິການ ລວມມີ 41 ທ່ານ (ຍິງ 5 ທ່ານ).

ນັບຕັ້ງແຕ່ກອງປະຊຸມສະໄໝສາມັນເທື່ອທີ 3 ຫາ ເທື່ອທີ 4 ຕາມ 3 ພາລະບົດບາດ ເຊິ່ງມີຜົນສຳເລັດແຕ່ລະດ້ານດັ່ງນີ້:

● **ຜົນສຳເລັດດ້ານນິຕິບັນຍັດ:**

- ສຳເລັດການສ້າງ ແລະ ປັບປຸງກົດໝາຍທີ່ກຳມາທິການຮັບຜິດຊອບ ຈຳນວນ 3 ສະບັບ ຄື: ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ, ກົດໝາຍວ່າດ້ວຍການສົ່ງເສີມວຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (ສະບັບປັບປຸງ) ແລະ ກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ.

- ໄດ້ປະສານສົມທົບກັບພາກສ່ວນກ່ຽວຂ້ອງຄົ້ນຄວ້າກົດໝາຍອີກ 3 ສະບັບ ທີ່ຈະນຳສະເໜີຜ່ານໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຄື: ກົດໝາຍວ່າດ້ວຍການທາງນ້ຳ (ສ້າງໃໝ່), ກົດໝາຍວ່າດ້ວຍວິສາຫະກິດ (ປັບປຸງ) ແລະ ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ (ປັບປຸງ).

- ສຳລັບນິຕິກຳໃຕ້ກົດໝາຍ ໄດ້ສຳເລັດ ມີ 7 ສະບັບ ເປັນຕົ້ນ: ຂໍ້ຕົກລົງຮ່ວມວ່າດ້ວຍການປະສານງານລະຫວ່າງກຳມາທິການພວກເຮົາ ກັບບັນດາກະຊວງກ່ຽວຂ້ອງ ເພື່ອເປັນບ່ອນອີງໃນການປະສານງານ.

● **ຜົນສຳເລັດດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ:**

- ໄດ້ຍົກສູງພາລະບົດບາດດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ດ້ວຍການປະສານສົມທົບກັບພາກສ່ວນກ່ຽວຂ້ອງ, ເຂົ້າຮ່ວມຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ບັນຫາທີ່ຕິດພັນກັບພາລະບົດບາດຂອງຕົນ.

- ໄດ້ຄົ້ນຄວ້າຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ທີ່ລັດຖະບານສະເໜີສະພາແຫ່ງຊາດພິຈາລະນາໃນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ໄດ້ອອກມະຕິຮັບຮອງທັງໝົດຈຳນວນ 5 ສະບັບ. ສ່ວນໃຫຍ່ແມ່ນພົວພັນກັບການຫັນປ່ຽນທີ່ດິນປ່າໄມ້ທຳມະຊາດໄປເປັນທີ່ດິນປະເພດອື່ນ ເພື່ອນຳໃຊ້ເຂົ້າໃນການພັດທະນາໂຄງການ, ການອໍຍົກເວັ້ນການປະຕິບັດບາງມາດຕາຂອງກົດໝາຍທີ່ພົວພັນກັບການພັດທະນາໂຄງການໄຟຟ້າ, ແຮ່ທາດ. ໄດ້ເຂົ້າຮ່ວມຄົ້ນຄວ້າ ແລະ ປະກອບຄວາມເຫັນຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈຳປີ 2022 ແລະ ທິດທາງແຜນການປີ 2023.

- **ໄດ້ສຳເລັດ:** ຍຸດທະສາດພັດທະນາພະລັງງານໄຟຟ້າຂອງ ສປປ ລາວ ປີ 2021-2030; ວິໄສທັດພັດທະນາເສດຖະກິດດີຈີຕອນແຫ່ງຊາດໄລຍະ 20 ປີ 2021-2030 ແລະ ຍຸດທະສາດພັດທະນາເສດຖະກິດດີຈີຕອນ ໄລຍະ 5 ປີ 2021-2025.

- **ກຳລັງຄົ້ນຄວ້າກະກຽມ:** ຍຸດທະສາດການຄຸ້ມຄອງ, ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030, ຍຸດທະສາດແຮ່ທາດ ຄາດວ່າຈະສາມາດມາຜ່ານກອງປະຊຸມສະໄໝສາມັນເທື່ອທີ V ຂອງສະພາແຫ່ງຊາດ ຊຸດທີ IX.

ນອກນັ້ນ, ບັນດາທ່ານ ສສຊ ທີ່ເປັນກຳມະການສັງກັດກຳມາທິການ ປະຈຳຢູ່ແຕ່ລະເຂດເລືອກຕັ້ງ ໄດ້ຕັ້ງໜ້າເຂົ້າຮ່ວມຄົ້ນຄວ້າ, ປະກອບຄຳຄິດຄຳເຫັນໃສ່ບັນຫາສຳຄັນພື້ນຖານຂອງທ້ອງຖິ່ນໄດ້ທັງໝົດ 243 ສະບັບ.

● **ຜົນສຳເລັດດ້ານການຕິດຕາມກວດກາ:** ກຳມາທິການໄດ້ເອົາໃຈໃສ່ປະຕິບັດພາລະບົດບາດດ້ານການຕິດຕາມກວດກາ ເປັນຕົ້ນ:

+ ການນຳເຂົ້ານ້ຳມັນເຊື້ອໄຟ ແລະ ຄຸ້ມຄອງລາຄາສິນຄ້າ,

+ ການຜະລິດກະສິກຳ ເພື່ອຊົມໃຊ້ພາຍໃນທົດແທນການນຳເຂົ້າ,

+ ການຂຶ້ນທະບຽນອອກໃບຕາດິນ,

+ ການຂຸດຄົ້ນແຮ່ທາດແບບທົດລອງ

+ ການພັດທະນາທ່າບົກ ແລະ ເຂດໂລຈິດສະຕິກ,

+ ການຊຸກຍູ້ສົ່ງເສີມການຜະລິດອາຫານສັດ, ຝຸ່ນ ເພື່ອສະໜອງການຜະລິດພາຍໃນ,

- ໄດ້ຄົ້ນຄວ້າ, ກວດກາ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ໃນຂົງເຂດທີ່ກຳມາທິການຮັບຜິດຊອບ ຫຼາຍກວ່າ 30 ສະບັບ ບັນຫາສ່ວນຫຼາຍທີ່ປະຊາຊົນສົນໃຈ ແມ່ນກ່ຽວກັບຄ່າຊົດເຊີຍ, ຂໍ້ຂັດແຍ່ງກ່ຽວກັບທີ່ດິນ, ຜົນກະທົບຈາກໂຄງການພັດທະນາ ແລະ ອື່ນໆ; ບັນດາທ່ານ ສສຊ ທີ່ເປັນກຳມະການສັງກັດກຳມາທິການ ປະຈຳຢູ່ແຕ່ລະເຂດເລືອກຕັ້ງ ກໍໄດ້ເອົາໃຈໃສ່ຕິດຕາມກວດກາ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ ໄດ້ທັງໝົດ 104 ຄັ້ງ; ສຳລັບຜົນການຕິດຕາມກວດກາຂອງກຳມາທິການ ແລະ ສສຊ ທີ່ເປັນກຳມະການສັງກັດກຳມາທິການ ໄດ້ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການປັບປຸງແກ້ໄຂບັນດາບັນຫາທີ່ຄົງຄ້າງຕ່າງໆ ໃນການພັດທະນາເສດຖະກິດ-ສັງຄົມ, ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດຕາມທິດສີຂຽວ ແລະ ຍືນຍົງ, ພ້ອມທັງເປັນການປະກອບສ່ວນຍົກສູງພາລະບົດບາດຂອງສະພາແຫ່ງຊາດໃນການສ້າງລັດແຫ່ງກົດໝາຍໃຫ້ນັບມື້ນັບສູງຂຶ້ນ.

ນອກຈາກນັ້ນ, ກຳມາທິການຂອງພວກຂ້າພະເຈົ້າ ຍັງໄດ້ເປັນເຈົ້າການປະສານສົມທົບກັບກຳມາທິການທີ່ກ່ຽວຂ້ອງພາຍໃນສະພາແຫ່ງຊາດ ຈັດສຳມະນາກ່ຽວກັບການພັດທະນາທ່າບົກ, ທິດທາງການປັບໂຄງສ້າງລາຄາໄຟຟ້າ, ການພັດທະລະບົບສາຍສົ່ງໄຟຟ້າແຫ່ງຊາດ ແລະ ການດຳເນີນທຸລະກິດຂອງລັດວິສາຫະກິດໄຟຟ້າລາວ ແລະ ຈັດກອງປະຊຸມຝຶກອົບຮົມສ້າງຄວາມເຂັ້ມແຂງທາງດ້ານວິຊາການວຽກງານຂົງເສດຖະກິດ ໃຫ້ແກ່ພະນັກງານວິຊາການທີ່ເປັນເສນາທິການໃຫ້ແກ່ກຳມາທິການ ແລະ ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ສະພາປະຊາຊົນຂັ້ນແຂວງ ໃນຂອບເຂດທົ່ວປະເທດ.

ນອກຈາກການເຄື່ອນໄຫວວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງກຳມາທິການທີ່ກ່າວມາຂ້າງເທິງນັ້ນແລ້ວ ກຳມາທິການ ແລະ ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງກຳມາທິການ ຍັງໄດ້ເຄື່ອນໄຫວລົງພົບປະຜູ້ມີສິດເລືອກຕັ້ງຢູ່ແຕ່ລະເຂດເລືອກຕັ້ງ ເພື່ອເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ II; ໄດ້ຮັບຟັງຄຳສະເໜີ ແລະ ຕອບບັນຫາຂໍ້ຂ້ອງໃຈຂອງປະຊາຊົນລາວບັນດາເຜົ່າ. ພ້ອມດຽວກັນນັ້ນ, ກໍໄດ້ນຳສົ່ງຄຳສະເໜີຂອງປະຊາຊົນ ຕໍ່ອຳນາດການປົກຄອງທ້ອງຖິ່ນ ແລະ ການນຳຂອງສະພາແຫ່ງຊາດ ເພື່ອພິຈາລະນາແກ້ໄຂບັນຫາຕ່າງໆຕາມກົດໝາຍ ແລະ ລະບຽບການ.

ກຳມາທິການ ໄດ້ເປັນເຈົ້າການກວດກາ, ຄົ້ນຄວ້າ, ພິຈາລະນາ ແລະ ນຳສົ່ງໃຫ້ສະພາປະຊາຊົນຂັ້ນແຂວງສືບຕໍ່ກວດກາ, ຄົ້ນຄວ້າ, ພິຈາລະນາແກ້ໄຂຄຳຮ້ອງຂໍຄວາມເປັນທຳ ໃນໄລຍະເວລາ 5 ເດືອນແຕ່ກອງປະຊຸມສະໄໝສາມັນເທື່ອທີ 3 ຫາເທື່ອທີ 4 ໄດ້ຮັບຄຳຮ້ອງທັງໝົດ 45 ສະບັບ, ໃນນັ້ນ, ຄົ້ນຄວ້າສຳເລັດ ແລະ ນຳສົ່ງໃຫ້ພາກສ່ວນກ່ຽວຂ້ອງສືບຕໍ່ແກ້ໄຂຕາມພາລະບົດບາດ ຈຳນວນ 37 ສະບັບ ແລະ ສືບຕໍ່ຄົ້ນຄວ້າ 8 ສະບັບ.

ບັນດາທ່ານ ສສຊ ທີ່ເປັນກຳມະການສັງກັດກຳມາທິການທີ່ປະຈຳຢູ່ແຕ່ລະເຂດເລືອກຕັ້ງ ໄດ້ຮ່ວມກັບຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ, ສະພາປະຊາຊົນຂັ້ນແຂວງ ຄົ້ນຄວ້າແກ້ໄຂຄຳຮ້ອງຂໍຄວາມເປັນທຳ ທີ່ໄດ້ຮັບທັງໝົດ 141 ສະບັບ. ໃນນີ້ ຄົ້ນຄວ້າສຳເລັດ 102 ສະບັບ, ສືບຕໍ່ຄົ້ນຄວ້າ 38 ສະບັບ; ສຳລັບຂໍ້ສະເໜີສ່ວນໃຫຍ່ແມ່ນບັນຫາຂໍ້ຂັດແຍ່ງກ່ຽວກັບທີ່ດິນ, ຄ່າຊົດເຊີຍທົດແທນຄ່າເສຍຫາຍ ແລະ ບັນຫາຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຈາກໂຄງການພັດທະນາຕ່າງໆຂອງລັດ ແລະ ເອກະຊົນ ສ່ວນຂໍ້ສະເໜີ ແລະ ບັນຫາທີ່ຍັງສືບຕໍ່ຄົ້ນຄວ້າພິຈາລະນານັ້ນ, ກຳມາທິການໄດ້ສົມທົບກັບພາກສ່ວນກ່ຽວຂ້ອງເພື່ອຄົ້ນຄວ້າແກ້ໄຂຕາມພາລະບົດບາດຂອງຕົນ ໃຫ້ຖືກຕ້ອງຕາມລະບຽບ ແລະ ກົດໝາຍ.

ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານຂອງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ກຳມາທິການໄດ້ກຳນົດທິດທາງແຜນການຈຸດສຸມໃນແຕ່ລະດ້ານ ດັ່ງນີ້:

❖ **ການປະຕິບັດພາລະບົດບາດດ້ານນິຕິບັນຍັດ:**

- ຍົກສູງຄວາມເປັນເຈົ້າການ ແລະ ປະສານສົມທົບກັບກຳມາທິການກົດໝາຍ ແລະ ກຳມາທິການອື່ນທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ແລະ ພາກສ່ວນຮັບຜິດຊອບສ້າງ ແລະ ປັບປຸງກົດໝາຍ.

- ເຂົ້າຮ່ວມແຕ່ຫົວທີ ໃນການຄົ້ນຄວ້າປະກອບຄຳເຫັນ, ກວດກາເນື້ອໃນຮອບດ້ານ ໃສ່ບັນດາກົດໝາຍທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນຄັ້ງຕໍ່ໄປ.

- ຊຸກຍູ້ຂະແໜງການກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ສ້າງ, ປັບປຸງ ແລະ ຈັດຕັ້ງຜັນຂະຫຍາຍບັນດານິຕິກຳໃຕ້ກົດໝາຍ.

- ຈັດຕັ້ງເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ມະຕິຕ່າງໆຂອງສະພາ ແລະ ຄະນະປະຈຳສະພາແຫ່ງຊາດ.

❖ **ການປະຕິບັດພາລະບົດບາດດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ:**

- ຍົກສູງບົດບາດຂອງກຳມາທິການໃນການເປັນເສນາທິການໃຫ້ແກ່ສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ໃນການຄົ້ນຄວ້າພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ.

- ຕິດຕາມ ຊຸກຍູ້ໃນການສ້າງຍຸດທະສາດສຳຄັນຕ່າງໆຂອງລັດຖະບານ.

- ສືບຕໍ່ຊຸກຍູ້ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ.

- ສືບຕໍ່ຄົ້ນຄວ້າບັນຫາສຳຄັນພື້ນຖານຂອງປະເທດຊາດ ທີ່ລັດຖະບານສະເໜີຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ ໃຫ້ສຳເລັດໄດ້ຢ່າງໜ້ອຍ 85%.

❖ **ການປະຕິບັດພາລະບົດບາດດ້ານການຕິດຕາມກວດກາ:**

- ສືບຕໍ່ປະຕິບັດພາລະບົດບາດຕິດຕາມກວດກາ ແລະ ຊຸກຍູ້ຕິດຕາມການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ.

- ເອົາໃຈໃສ່ຊຸກຍູ້ຕິດຕາມການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ.

- ເອົາໃຈໃສ່ສືບຕໍ່ແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນທີ່ຍັງຄ້າງໃຫ້ສຳເລັດ.

- ນອກຈາກນັ້ນ, ເອົາໃຈໃສ່ວຽກງານສ້າງຄວາມເຂັ້ມແຂງຍົກລະດັບຄວາມຮູ້, ຄວາມສາມາດສະເພາະດ້ານເພີ່ມທະວີການພົວພັນຮ່ວມມືກັບປະເທດເພື່ອນມິດ ຕາມແນວທາງການຕ່າງປະເທດຂອງພັກ.

ໃນຕອນທ້າຍ, ທ່ານຍັງໄດ້ກ່າວຕື່ມອີກວ່າ: **ໃນໄລຍະຜ່ານມາ ຮັບຮູ້ວ່າພາກສ່ວນຕ່າງໆ ກໍໄດ້ສຸມທຸກກຳລັງແຮງທີ່ມີໃນການຈັດຕັ້ງປະຕິບັດພາລະບົດບາດຂອງຕົນແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນແຕ່ລະໄລຍະ ໄດ້ປະຄັບປະຄອງໃຫ້ສະພາບການຄ່ອຍໆດີຂຶ້ນ ເຖິງຢ່າງໃດກໍຕາມ, ໃນນາມເປັນສະມາຊິກສະພາແຫ່ງຊາດ ເຮັດໜ້າທີ່ເປັນຜູ້ແທນປະຊາຊົນສະເໜີມາຍັງອົງການຈັດຕັ້ງລັດ ແລະ ພາກສ່ວນກ່ຽວຂ້ອງ ເປັນຕົ້ນ ຂົງເຂດເສດຖະກິດ ທີ່ຕິດພັນກັບຊີວິດການເປັນຢູ່ຂອງປະຊາຊົນ, ຈົ່ງສຸມໃສ່ຕື່ມໃນການປະຕິບັດພາລະບົດບາດ ແລະ ແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃຫ້ທັນເວລາ ໂດຍໃຫ້ມີມາດຕະການ, ກົນໄກ ແລະ ວິທີການຈັດຕັ້ງປະຕິບັດ ແກ້ໄຂບັນຫາສະເພາະໜ້າຮີບດ່ວນ ແລະ ມີລັກສະນະຍຸດທະສາດຍາວນານ ເພື່ອໃຫ້ບັນຫາຕ່າງໆເຂົ້າສູ່ສະພາບດີຂຶ້ນເທື່ອລະກ້າວ.**

# ຄະນະປະຈຳສະພາແຫ່ງຊາດ ຊຸດທີ IX



ທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ

ທ່ານ ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ

ທ່ານ ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ

ທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ

ທ່ານ ສົມມາດ ພົນເສນາ ຮອງປະທານສະພາແຫ່ງຊາດ

ທ່ານ ພົນ ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ

ທ່ານ [illegible] ປະທານຄະນະກຳມະການແຜນການ, ການເງິນ ແລະ ການກວດສອບ

ທ່ານ ນາງ [illegible] ເລຂາທິການສະພາແຫ່ງຊາດ

ທ່ານ [illegible] ປະທານຄະນະກຳມະການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ

ທ່ານ ນາງ [illegible] ປະທານຄະນະກຳມະການ ວັດທະນະທຳ-ສັງຄົມ

ທ່ານ [illegible] ປະທານຄະນະກຳມະການກົດໝາຍ

ທ່ານ [illegible] ປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

ທ່ານ [illegible] ປະທານຄະນະກຳມະການຍຸຕິທຳ

ທ່ານ [illegible] ປະທານຄະນະກຳມະການການຕ່າງປະເທດ

ທ່ານ [illegible] [illegible]

## ກມຍທ ປຶກສາຫາລື ແລະ ຄົ້ນຄວ້າຮ່າງຂໍ້ຕົກລົງຮ່ວມ ວ່າດ້ວຍການປະສານງານຮ່ວມກັບ 2 ພາກສ່ວນ



(ສພຊ) ເພື່ອຮັບຟັງການລາຍງານຂອງຄະນະຮັບຜິດຊອບກຽວກັບການຄົ້ນຄວ້າ, ປັບປຸງ ແລະ ປະກອບຄຳເຫັນໃສ່ຮ່າງຂໍ້ຕົກລົງຮ່ວມ ລະຫວ່າງກຳມາທິການຍຸຕິທຳ (ກມຍທ) ກັບສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ໃນວັນທີ 4 ມັງກອນ 2023 ທີ່ສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ສີສົມທອນ ສ. ພາບມີໄຊຍ໌ ຮອງປະທານກຳມາທິການຍຸຕິທຳ ເຂົ້າຮ່ວມມີບັນດາທ່ານຕາງໜ້າຈາກສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ຄະນະກົມ, ຄະນະພະແນກ ພ້ອມດ້ວຍພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ຮ່າງຂໍ້ຕົກລົງຮ່ວມວ່າດ້ວຍການປະສານງານລະຫວ່າງ ກມຍທ ກັບສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ; ຈາກນັ້ນ, ກອງປະຊຸມໄດ້ສັງລວມຜົນຂອງການຄົ້ນຄວ້າ ແລ້ວນຳໄປຄົ້ນຄວ້າ, ປັບປຸງ ເພື່ອຂໍທິດຊີ້ນຳຄືນກັບພາກສ່ວນຂອງ.

(ສອນສັກ ວັນວິໄຊ)



## ມອບເງິນຊ່ວຍເຫຼືອ 50 ລ້ານກີບ ເພື່ອຈັດຊື້ໂທລະໂຄ່ງ

(ສພຊ) ວັນທີ 30 ທັນວາ 2022 ທີ່ຫໍສະພາແຫ່ງຊາດ ໄດ້ມີພິທີມອບເງິນຊ່ວຍເຫຼືອ ເພື່ອຈັດຊື້ໂທລະໂຄ່ງໃຫ້ແກ່ບ້ານທີ່ຍັງຂາດແຄນຢູ່ແຂວງຜົ້ງສາລີ ມູນຄ່າ 50 ລ້ານກີບ (ຫ້າສິບລ້ານກີບ) ຈາກທ່ານ ພົງໄຊ ໄຊຊະນະໄຊຍະເສນາ ຜູ້ອຳນວຍການກຸ່ມບໍລິສັດ ວັງຕັດ ຂຸດຄົ້ນບໍ່ແຮ່ ຈຳກັດ.



ໃນພິທີຄັ້ງນີ້, ກ່າວມອບໂດຍຄະນະບໍລິຫານງານກຸ່ມບໍລິສັດດັ່ງກ່າວ ແລະ ກ່າວຮັບໂດຍທ່ານ ສົມຈິດ ທັບລາກອນ ຮອງປະທານສະພາປະຊາຊົນແຂວງຜົ້ງສາລີ, ເຂົ້າຮ່ວມເປັນສັກຂີພິຍານຂອງທ່ານ ຄໍາມ່ວນ ຊົມສີຫາປັນຍາ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ; ທ່ານ ສີສົມທອນ ສ. ພາບມີໄຊຍ໌ ຮອງປະທານກຳມາທິການຍຸຕິທຳ.

(ກົງທະນູຄຳ ພິພັດເສລີ)

# ຖະແຫຼງຂ່າວ ການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງ ສປນວ



**(ສພຊ) ໃນຕອນເຊົ້າວັນທີ 6 ມັງກອນ 2023 ທີ່ສຳນັກງານອົງການປົກຄອງນະຄອນຫຼວງວຽງຈັນ, ທ່ານ ນະຄະເສນ ສີຫາລາດ ເລຂາທິການສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສປນວ ຊຸດທີ II ເຊິ່ງຈະດຳເນີນຂຶ້ນໃນລະຫວ່າງວັນທີ 11-19 ມັງກອນ 2023 ທີ່ຫ້ອງປະຊຸມສຳນັກງານອົງການປົກຄອງນະຄອນຫຼວງ ເພື່ອສຸມໃສ່ພິຈາລະນາ ແລະ ຮັບຮອງເອົາບັນດາສຳຄັນພື້ນຖານຕ່າງໆຂອງນະຄອນຫຼວງວຽງຈັນ** ຄື:

ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງທ່ານເຈົ້າຄອງນະຄອນຫຼວງ ກ່ຽວກັບຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຜນງົບປະມານປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງນະຄອນຫຼວງວຽງຈັນ; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ 2023 ຂອງອົງການກວດສອບປະຈຳພາກພາງ; ບົດລາຍງານຜົນການກວດສອບ ( ອ່ານຕໍ່ໜ້າ 11 )

# ສະພາປະຊາຊົນແຂວງຄຳມ່ວນ ປາຖະກະຖາວັນສຳຄັນຂອງຊາດ-ຂອງພັກ



**(ສພຊ) ໃນວັນທີ 22 ທັນວາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຄຳມ່ວນ ໄດ້ຈັດພິທີປາຖະກະຖາວັນສຳຄັນຂອງຊາດ-ຂອງພັກ ຄື ວັນຊາດທີ 2 ທັນວາ ຄົບຮອບ 47 ປີ (2/12/1975-2/12/2022) ແລະ ວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 102 ປີ (13/12/1920-13/12/2022) ໂດຍການເຂົ້າຮ່ວມເປັນປະທານ ແລະ ເຜີຍແຜ່ເອກະສານສຳຄັນໃນຄັ້ງນີ້ ໂດຍທ່ານ ບົວພັນ ແສງຈັນ ກຳມະການພັກແຂວງ ຮອງປະທານສະພາປະຊາຊົນແຂວງຄຳມ່ວນ ແລະ ທ່ານ ຄຳສຸກ ວັນທະວົງສາ ຄະນະປະຈຳສະພາປະຊາຊົນແຂວງ, ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ເຂົ້າຮ່ວມມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ ແລະ ຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫຼອດຮອດພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມຮັບຟັງ.**

ໃນການປາຖະກະຖາດັ່ງກ່າວ ແມ່ນໄດ້ຍົກໃຫ້ເຫັນເຖິງມູນເຊື້ອ ແລະ ຄວາມໝາຍສຳຄັນຂອງວັນຊາດ 2 ທັນວາ ໂດຍສະເພາະແມ່ນຊາດລາວມີມູນເຊື້ອທີ່ສະຫງ່າ ອົງອາດ ແຫ່ງການຕໍ່ສູ້ຂອງປະຊາຊົນລາວບັນດາເຜົ່າ ພາຍໃຕ້ການນຳພາຂອງພັກ ປະຊາຊົນປະຕິວັດລາວ ໄດ້ສາມັກຄີກັນຕໍ່ສູ້ຢ່າງພິລະອາດຫານຕ້ານການຮຸກຮານ ແລະ ການຄອບຄອງຂອງພວກຈັກກະພັດລ່າເມືອງຂຶ້ນທັງແບບເກົ່າ ແລະ ແບບໃໝ່ ສາມາດປົດປ່ອຍປະເທດຊາດຢ່າງມີໄຊ, ສະຖາປະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຂຶ້ນຢ່າງສະຫງ່າຜ່າເຜີຍໃນວັນທີ 2 ທັນວາ 1975 ເຊິ່ງແມ່ນວັນແຫ່ງໄຊຊະນະອັນຍິ່ງໃຫຍ່ໃນປະຫວັດສາດຊາດລາວ ແມ່ນວັນທີ່ປະຊາຊົນລາວບັນດາເຜົ່າໄດ້ມີອິດສະຫຼະພາບ ແລະ ໄດ້ເປັນເຈົ້າຂອງປະເທດຊາດຢ່າງແທ້ຈິງ.

ພ້ອມດຽວກັນນີ້, ຍັງໄດ້ຍົກໃຫ້ເຫັນຜົນງານແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຕະຫຼອດໄລຍະ 47 ປີ ພາຍຫຼັງປະເທດຊາດເຮົາໄດ້ຮັບການສະຖາປານາ ເປັນຕົ້ນແມ່ນໄລຍະ 10 ປີ ແຫ່ງການຟື້ນຟູເສດຖະກິດ, ວັດທະນະທຳ-ສັງຄົມ (1975-1985), ໄລຍະ 35 ປີ ແຫ່ງການຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ (ແຕ່ປີ 1986 ຈົນເຖິງປັດຈຸບັນ) ທີ່ໄດ້ສ່ອງແສງໃຫ້ເຫັນຜົນງານທີ່ພົ້ນເດັ່ນໃນແຕ່ລະດ້ານເປັນອັນລະອຽດ.

ໂອກາດດຽວກັນ, ທ່ານ ຄຳສຸກ ວັນທະວົງສາ ໄດ້ທວນຄືນໃຫ້ເຫັນປະຫວັດວັນເກີດຂອງປະທານ ໄກສອນ ພົມວິຫານ ຄົບຮອບ 102 ປີ (13 ທັນວາ 1920-13 ທັນວາ 2022) ເປັນຕົ້ນແມ່ນຊີວິດ ແລະ ການເຄື່ອນໄຫວປະຕິວັດຂອງປະທານ ໄກສອນ ພົມວິຫານ, ຜົນງານ ແລະ ຄຸນງາມຄວາມດີຂອງທ່ານໃນການຊີ້ນຳໆພາພາລະກິດການປະຕິວັດ, ການເສີມຂະຫຍາຍ ແລະ ສືບທອດມໍລະດົກອັນລ້ຳຄ່າຂອງປະທານ ໄກສອນ ພົມວິຫານ ທີ່ໄດ້ສ້າງໄວ້, ທ່ານແມ່ນນັກຮັກຊາດຜູ້ຍິ່ງໃຫຍ່, ແມ່ນລູກຜູ້ປະເສີດຂອງປະຊາຊົນລາວບັນດາເຜົ່າ, ແມ່ນນັກປະຕິວັດຜູ້ດີເລີດ, ເປັນຜູ້ນຳສູງສຸດຂອງການປະຕິວັດລາວທີ່ມີຄວາມປີຊາສາມາດ, ມີຄວາມສະຫຼາດຫຼັກແຫຼມ, ມີໄຫວພິບອັນແຫຼມຄົມ ແລະ ມີນ້ຳໃຈຕໍ່ສູ້ອັນເດັດດ່ຽວໜຽວແໜ້ນ ເປັນຜູ້ນຳທີ່ແສນເຄົາລົບຮັກຂອງປະຊາຊົນ ແລະ ເປັນວິລະບູລຸດຂອງຊາດລາວເຮົາ.

# ກະກຽມເນື້ອໃນກອງປະຊຸມສະໄໝສາມັນເທື່ອທີ 4



**(ສພຊ) ເພື່ອເຮັດໃຫ້ການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ໃຫ້ບັນລຸຕາມລະດັບຄາດໝາຍ, ສອດຄ່ອງກັບສະພາບຄວາມເປັນຈິງຂອງແຂວງ, ຮັບປະກັນທາງດ້ານເນື້ອໃນ ແລະ ທັນຕາມກຳນົດເວລາ.**

ໃນວັນທີ 20 ທັນວາ 2022 ສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ເປີດກອງປະຊຸມຄົ້ນຄວ້າ, ປຶກສາຫາລື ແລະ ກະກຽມເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ທີ່ຈະນຳເຂົ້າກອງປະຊຸມຮ່ວມກັບອົງການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານນາງ ອຸ່ນຫຼ້າ ອ້ຽງລໍລາດ ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານຫົວໜ້າ-ຮອງຫົວໜ້າຫ້ອງວ່າການແຂວງ, ປະທານກວດກາລັດແຂວງ ຫົວໜ້າອົງການໄອຍະການປະຊາຊົນ ຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ, ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ຫົວໜ້າພະແນກການເງິນແຂວງ, ມີຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານ-ວິຊາການພາຍໃນສະພາຍໃນທີ່ກ່ຽວຂ້ອງເຂົ້າ ຮ່ວມທັງໝົດ 22 ທ່ານ ຍິງ 7 ທ່ານ.

ກອງປະຊຸມໄດ້ຮັບຟັງການຜ່ານຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II. ພ້ອມນັ້ນ, ບັນດາທ່ານຜູ້ແທນໄດ້ປະກອບຄຳຄິດເຫັນ, ຄົ້ນຄວ້າ, ປຶກສາຫາລື, ກະກຽມ ແລະ ເປັນເອກະພາບກັນຕໍ່ກັບແຜນການກະກຽມເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ເພື່ອເປັນການປຶກສາຫາລື, ຄົ້ນຄວ້າ, ກະກຽມ ແລະ ຕົກລົງເປັນເອກະພາບກັນ ເພື່ອເຮັດໃຫ້ເນື້ອໃນທີ່ນຳເຂົ້າໃນກອງປະຊຸມຄັ້ງນີ້ມີເນື້ອໃນຄົບຖ້ວນສົມບູນ ຮັບປະກັນຄຸນນະພາບ, ສອດຄ່ອງກັບສະພາບຕົວຈິງ ເພື່ອຮັບປະກັນໃຫ້ເນື້ອໃນດັ່ງກ່າວສາມາດນຳເຂົ້າຄົ້ນຄວ້າ, ພິຈາລະນາ ແລະ ທ່ວງທັນກັບເວລາຕາມກຳນົດທີ່ວາງໄວ້.

(ນາງ ອຳພອນ ສີປະເສີດ)

# ປຶກສາຫາລືກ່ຽວກັບການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ



(ສພຊ) ໃນຕອນເຊົ້າວັນທີ 16 ທັນວາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຜົ້ງສາລີ, ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ສະພາປະຊາຊົນແຂວງ ໄດ້ຈັດ**ກອງປະຊຸມປຶກສາຫາລືຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການຄົ້ນຄວ້າແກ້ໄຂຄຳຮອງຂໍຄວາມເປັນທຳຂອງພົນລະເມືອງ** ທີ່ສະເໜີເຂົ້າໂທລະສັບສາຍດ່ວນ ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ ຊຸດທີ II ໂດຍການເປັນປະທານຂອງ**ທ່ານ ຄຳພັນ ຄຸນສົມບັດ ຮອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ**; ເຂົ້າຮ່ວມມີທ່ານ ສຸວັນຟູ ລາວລີ ຮອງປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ, ມີຕາງໜ້າຈາກສານປະຊາຊົນເຂດ 1 ແລະ ວິຊາການພາຍໃນຄະນະກຳມະການຂອງສະພາປະຊາຊົນແຂວງ ເຂົ້າຮ່ວມ.

ທັງນີ້, ເພື່ອເກັບກຳຂໍ້ມູນ, ຮັບຟັງການລາຍງານ, ຊີ້ແຈງ ຈາກພາກສ່ວນກ່ຽວຂ້ອງ ກ່ຽວກັບຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ເລື່ອງ: ຂໍ້ຂັດແຍ່ງທີ່ດິນ ເພື່ອນຳສະເໜີຄະນະປະຈຳສະພາປະຊາຊົນແຂວງ ຄົ້ນຄວ້າພິຈາລະນາ ແລະ ແກ້ໄຂໃນຂັ້ນຕອນຕໍ່ໄປ.

(ນັກຂ່າວ ສພຂ ຜົ້ງສາລີ)

# ສ້າງຄວາມເຂັ້ມແຂງກ່ຽວກັບວຽກງານ ການແກະຄຳເຫັນຂອງຜູ້ແທນກອງປະຊຸມ



**(ສພຊ) ເພື່ອກະກຽມຄວາມພ້ອມທາງດ້ານວິຊາການ ກໍຄືພະນັກງານທີ່ເປັນເສນາທິການໃຫ້ແກ່ຜູ້ແທນກອງປະຊຸມ; ຕອນເຊົ້າວັນທີ 22 ທັນວາ 2022 ສະພາປະຊາຊົນແຂວງສະຫວັນນະເຂດ ໄດ້ຈັດກອງປະຊຸມຝຶກອົບຮົມ ເຊິ່ງເປັນປະທານກອງປະຊຸມໂດຍທ່ານນາງ ພູທອນ ແກ້ວພູວົງ ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານປະທານ ແລະ ຮອງປະທານຄະນະກຳມະການ, ຄະນະເລຂາທິການ ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມທັງພະນັກງານວິຊາການທັງໝົດພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມ.**

ທ່ານ ນາງ ພູທອນ ແກ້ວພູວົງ ໄດ້ໃຫ້ຄຳຄິດເຫັນໃນການຝຶກອົບຮົມໃນຄັ້ງນີ້ ເປັນຕົ້ນແມ່ນຄວາມໝາຍ ແລະ ຄວາມສຳຄັນໃນການແກະຄຳເຫັນຂອງຜູ້ແທນກອງປະຊຸມ, ເພື່ອສ້າງປຶ້ມປະມວນ ເພື່ອຮັກສາໄວ້ເປັນຂໍ້ມູນອ້າງອີງ, ຂໍ້ມູນປະຫວັດສາດສຳລັບການຄົ້ນຄວ້າ ແລະ ສະໜອງໃຫ້ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ພະນັກງານເສນາທິການ, ບັນດາອົງການລັດຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ຈາກນັ້ນ, ວິທະຍາກອນ ກໍໄດ້ດຳເນີນການຝຶກອົບຮົມຕາມແຕ່ລະຫົວຂໍ້ ຄື: ການປະກອບທາງດ້ານບຸກຄະລາກອນ ແລະ ອຸປະກອນ ເຂົ້າໃສ່ວຽກງານແກະຄຳເຫັນ, ບຸກຄະລາກອນທີ່ຈະມາບັນທຶກ ແລະ ຕັດແບ່ງສຽງ, ວິທີການແກະຄຳເຫັນ, ການກວດແກ້ບັນດາເນື້ອໃນ ແລະ ການສ້າງປຶ້ມປະມວນ.

ໃນກອງປະຊຸມຝຶກອົບຮົມ, ໄດ້ເປີດໂອກາດໃຫ້ແກ່ສຳມະນາກອນປະກອບຄຳຄິດເຫັນ ແລະ ສອບຖາມບາງບັນຫາທີ່ຍັງບໍ່ທັນລະອຽດ ແລະ ວິທະຍາກອນກໍໄດ້ອະທິບາຍ ແລະ ຊີ້ແຈງບັນຫາທີ່ຍັງຄົງຄ້າງຢ່າງກົງໄປກົງມາ ພ້ອມທັງໄດ້ນຳພາສຳມະນາກອນປະຕິບັດຕົວຈິງໃນການແກະຄຳເຫັນຂອງຜູ້ແທນກອງປະຊຸມ.

ໃນຕອນທ້າຍ, ປະທານກອງປະຊຸມໄດ້ສະຫຼຸບຕີລາຄາ ແລະ ກາວຍ້ອງຍໍຊົມເຊີຍຄະນະຮັບຜິດຊອບຈັດຊຸດຝຶກອົບຮົມໃນຄັ້ງນີ້ ພ້ອມທັງຊີ້ນຳໃຫ້ພະນັກງານທັງໝົດທີ່ເຂົ້າຮ່ວມ ຈົ່ງນຳໃຊ້ບົດຮຽນທີ່ໄດ້ຝຶກອົບຮົມໃນຊຸດນີ້ ເອົາໄປໝູນໃຊ້ໃຫ້ເກີດດອກອອກຜົນ ໂດຍສະເພາະພະນັກງານທີ່ເປັນເສນາທິການໃຫ້ແກ່ຜູ້ແທນກອງປະຊຸມ ຕ້ອງໄດ້ສຸມທຸກສະຕິປັນຍາ ເຫື່ອແຮງເຂົ້າໃສ່ ເພື່ອໃຫ້ກອງປະຊຸມທຸກໆສະໄໝປະສົບຜົນສຳເລັດຢ່າງຈົບງາມ.

(ນັກຂ່າວ ສພຂ ສະຫວັນນະເຂດ)

# ສພຂ ຫຼວງພະບາງ ອອກມະຕິຮັບຮອງບັນຫາສຳຄັນຂອງແຂວງ 19 ສະບັບ



**ທ່ານ ວົງສະຫວັນ ເທບພະຈັນ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 6 ແຂວງ ຫຼວງພະບາງ ທັງເປັນປະທານສະພາປະຊາຊົນແຂວງ (ສພຂ) ຫຼວງພະບາງ ໄດ້ໃຫ້ສຳພາດໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງທ່ານໄດ້ໃຫ້ຮູ້ວ່າ:** ໃນນາມຕາງໜ້າຄະນະ ສສຊ ກໍຄືສະມາຊິກສະພາປະຊາຊົນແຂວງ (ສສຂ) ຫຼວງພະບາງ ຂໍຂອບໃຈຕໍ່ສື່ມວນຊົນ ທີ່ໃຫ້ໂອກາດຄະນະ ສສຊ, ສພຂ ຫຼວງພະບາງ ໄດ້ນຳເອົາຜົນສຳເລັດການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ການເປັນຕົວແທນແຫ່ງສິດຜົນປະໂຫຍດຂອງປະຊາຊົນໄລຍະ 1 ປີ ມາເຜີຍແຜ່ຜ່ານທາງສື່ມວນຊົນ ເພື່ອໃຫ້ການນຳພັກ-ລັດ, ພະນັກງານ ທະຫານ, ຕຳຫຼວດ, ພໍ່ແມ່ພີ່ນ້ອງຜູ້ມີສິດເລືອກຕັ້ງ ທີ່ພວມຕິດຕາມການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຮັບຊາບຜົນງານດ້ານຕ່າງໆ ທີ່ຄະນະ ສສຊ ປະຈຳເຂດເລືອກຕັ້ງ ສສຂ ຫຼວງພະບາງ ຍາດໄດ້ດັ່ງນີ້:

**ດ້ານນິຕິບັນຍັດ ກໍຄືນິຕິກຳໃຕ້ກົດໝາຍ:** ສສຊ, ສສຂ ໄດ້ຄົ້ນຄວ້າພິຈາລະນາລົງມະຕິຮັບຮອງເອົາການສ້າງນິຕິກຳໃຕ້ກົດໝາຍຂອງອົງການລັດຂັ້ນແຂວງ 4 ສະບັບຄື: ຂໍ້ຕົກລົງວ່າດ້ວຍການກຳນົດຫົວໜ່ວຍການທົດແທນຄ່າເສຍຫາຍໃຫ້ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນ້ຳຖ້ວມຢູ່ເທສະບານນະຄອນຫຼວງພະບາງ; ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການປູກຫຍ້າລ້ຽງສັດ ຢູ່ແຂວງຫຼວງພະບາງ; ຂໍ້ຕົກລົງວ່າດ້ວຍການກຳນົດເຂດ ແລະ ປະເມີນລາຄາທີ່ດິນ 8 ເມືອງ (ເມືອງໂພນໄຊ, ໂພນທອງ, ວຽງຄຳ, ປາກແຊງ, ພູຄູນ, ປາກອູ, ຈອມເພັດ ແລະ ເມືອງງອຍ); ຂໍ້ຕົກລົງວ່າດ້ວຍການຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຮອບດ້ານຂອງແຂວງຫຼວງພະບາງ. ນອກນີ້ ສສຊ, ສສຂ ຍັງໄດ້ເຂົ້າຮ່ວມທາບທາມຮ່າງກົດໝາຍສະບັບປັບປຸງ, ສ້າງໃໝ່ ທີ່ສະພາແຫ່ງຊາດຈັດ ແລະ ສົ່ງໃຫ້ຈຳນວນ 31 ສະບັບ.



ສຳລັບພາຍໃນ ສພຂ ບັນດາຄະນະກຳມະການກໍໄດ້ສົມທົບພະແນກການອົງການລັດຂັ້ນແຂວງສ້າງບົດບັນທຶກຮ່ວມລະຫວ່າງຄະນະກຳມະການ ກັບພະແນກການຕ່າງໆໃນຂົງເຂດຄວາມຮັບຜິດຊອບໄດ້ທັງໝົດ 14 ສະບັບ (ຂົງເຂດເສດຖະກິດ 7 ສະບັບ, ຂົງເຂດວັດທະນະທຳ-ສັງຄົມ 7 ສະບັບ); ອອກມະຕິຮັບຮອງເອົາບັນຫາສຳຄັນຂອງແຂວງລວມທັງໝົດ 19 ສະບັບ ໃນນີ້, ວຽກຂອງອົງການປົກຄອງ 9 ສະບັບ, ວຽກຂອງອົງການໄອຍະການປະຊາຊົນແຂວງ 4 ສະບັບ, ວຽກຂອງສານປະຊາຊົນແຂວງ 6 ສະບັບ.

**ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງແຂວງ:** ຕໍ່ກັບບັນຫາດັ່ງກາວນີ້ ບັນດາທານຄະນະປະຈຳ, ສສຂ, ໄດ້ພ້ອມກັນຍົກສູງຄວາມຮັບຜິດຊອບໜ້າທີ່ການເປັນຕົວແທນແຫງສິດຜົນປະໂຫຍດອັນຊອບທຳຂອງປະຊາຊົນ ເຂົ້າໃນການຄົ້ນຄວ້າ ວິເຄາະ ວິໄຈບັນຫາຕາງໆ ໃນໄລຍະດຳເນີນກອງປະຊຸມສະພາສະໄໝສາມັນເທື່ອທີ 3 ແລະ ກອງປະຊຸມຄະນະປະຈຳ ສພຂ ມາຮອດປັດຈຸບັນ ມີຈຳນວນ 32 ບັນຫາ. ນອກນີ້, ຄະນະ ສສຊ, ສສຂ ໄດ້ເຂົ້າຮວມກອງປະຊຸມທາງໄກ ຕາມການເຊີນຂອງຄະນະປະຈຳສະພາແຫ່ງຊາດ ແລະ ບັນດາກຳມາທິການສະພາແຫງຊາດ ລວມທັງໝົດ 4 ຄັ້ງ.

**ດ້ານການຕິດຕາມກວດກາ:** ປະຕິບັດຕາມກົດໝາຍວາຍສະພາແຫງຊາດ ແລະ ສພຂ ພວກເຮົາສ້າງແຜນການຕິດຕາມກວດກາປະຈຳ 1 ປີ, ປະຈຳ 6 ເດືອນ ພ້ອມທັງຈັດຕັ້ງປະຕິບັດຕາມເປົ້າໝາຍຄື: ບັນດາພະແນກການກ່ຽວທີ່ຂ້ອງເມືອງ ແລະ ນະຄອນ ທຽບແຜນການແມ່ນບັນລຸ 100%. ນອກນີ້, ຍັງໄດ້ລົງຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕິດພັນກັບການຜັນຂະຫຍາຍ 2 ວາລະແຫ່ງຊາດຢູ່ບັນດາເມືອງ-ນະຄອນ ແລະ ໄດ້ຕິດຕາມກວດກາການແກ້ໄຂຄຳຮ້ອງທຸກຂອງປະຊາຊົນໃນໄລຍະ 1 ປີ ຜ່ານມາໄດ້ມີຄຳຮ້ອງທຸກຂອງປະຊາຊົນມາຍື່ນຕໍ່ ສພຂ ຈຳນວນ 71 ເລື່ອງ, ແກ້ໄຂສຳເລັດຈຳນວນ 37 ເລື່ອງ ຈັດສົ່ງພາກສ່ວນກ່ຽວຂ້ອງຄົ້ນຄວ້າແກ້ໄຂຢູ່ ຈຳນວນ 34 ເລື່ອງ.

**ທ່ານຍັງໃຫ້ຮູ້ຕື່ມວ່າ:** ໃນຖານະເປັນຕົວແທນປະຊາຊົນລາວບັນດາເຜົ່າ, ສສຊ ປະຈຳເຂດເລືອກຕັ້ງ ແລະ ສສຂ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ນຳເອົາຜົນສຳເລັດກອງປະຊຸມສະພາແຫງຊາດ, ກອງປະຊຸມ ສພຂ ໄປເຜີຍແຜ່ໃຫ້ຜູ້ມີສິດເລືອກຕັ້ງຮັບຮູ້ ພ້ອມທັງໂອ້ລົມ, ເກັບກຳຄຳຄິດ, ຄຳເຫັນ, ຄຳສະເໜີຂອງປະຊາຊົນ ບັນຫາໃດທີ່ເຫັນວ່າສາມາດເຮັດໜ້າທີ່ອະທິບາຍຊີ້ແຈງກັບທີ່ໄດ້ ແມ່ນຊີ້ແຈງກັບທີ່, ບັນຫາໃດທີ່ແມ່ນຄວາມຮັບຜິດຊອບຂອງອົງການລັດ ແມ່ນໄດ້ເກັບກຳບັນທຶກສະເໜີພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂ ຫຼື ມີຄຳຊີ້ແຈງໃຫ້ກັບຜູ້ມີສິດເລືອກຕັ້ງຮັບຊາບ, ພາຍຫຼັງກອງປະຊຸມສະໄໝສາມັນເທື່ອທີ 3 ໄດ້ເຄື່ອນໄຫວພົບປະໂອ້ລົມປະຊາຊົນທັງໝົດ 220 ຈຸດ, ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 18.627 ເທື່ອຄົນ ຍິງ 8.486 ເທື່ອຄົນ. ນອກນີ້, ບັນດາທານ ສສຊ ປະຈຳເຂດເລືອກຕັ້ງ, ສສຂ ຍັງໄດ້ປກລະດົມວັດຖຸປັດໄຈ ໄປຊຸກຍູ້ຊ່ວຍເຫຼືອປະຊາຊົນ, ອົງການປົກຄອງທ້ອງຖິ່ນ, ກົມກອງ, ບ້ານ ລວມມູນຄ່າ 100 ກວ່າລ້ານກີບ.

ຜ່ານການລົງພົບປະຜູ້ມີສິດເລືອກຕັ້ງ ແລະ ຕິດຕາມກວດກາບັນຫາທີ່ປະຊາຊົນສະເໜີຫຼາຍແມ່ນໃຫ້ເພີ່ມທະວີການຊຸກຍູ້ສົ່ງເສີມເຕັກນິກການປູກ-ການລ້ຽງໃຫ້ປະຊາຊົນໃຫ້ທົ່ວເຖິງ, ສະເໜີໃຫ້ແກ້ບັນຫາຄ່າຄອງຊີບນັບມື້ນັບສູງຂຶ້ນ, ບັນຫາເສັ້ນທາງ (ຂໍໃຫ້ສ້ອມແປງໃຫ້ທຽວໄດ້ທັງລະດູແລ້ງ ແລະ ລະດູຝົນ), ບັນຫານ້ຳລິນໃຊ້ບໍ່ພຽງພໍ, ບັນຫາຢາເສບຕິດ ແລະ ບັນຫາລູກ, ຫຼານ ເປັນພະນັກງານອາສາສະໝັກໄດ້ຫຼາຍປີ ບໍ່ໄດ້ຕົວເລກລັດຖະກອນ.

ຕໍ່ກັບບັນຫາທີ່ປະຊາຊົນສະເໜີນັ້ນ ມີບາງບັນຫາຍັງຄົງຄ້າງທີ່ສະພາຕ້ອງໄດ້ສືບຕໍ່ຕິດຕາມ, ກວດກາການຈັດຕັ້ງປະຕິບັດການແກ້ໄຂຈາກອົງການລັດ ເນື່ອງຈາກເປັນບັນຫາລວມທີ່ຕ້ອງໄດ້ຜ່ານການຄົ້ນຄວາ, ວິເຄາະວິໄຈ ຂໍ້ມູນເປັນຕົ້ນບັນຫາເສັ້ນທາງ, ບັນຫານ້ຳລິນ, ບັນຫາຢາເສບຕິດ ແລະ ບັນຫາລູກ, ຫຼານເປັນພະນັກງານອາສາສະໝັກໄດ້ຫຼາຍປີບໍ່ໄດ້ຕົວເລກລັດຖະກອນ.

## ຕິດຕາມຊຸກຍູ້ວຽກງານຂົງເຂດ ວັດທະນະທຳ-ສັງຄົມ ຢູ່ເມືອງສະໜາມໄຊ





**(ສພຊ) ໃນວັນທີ 21 ທັນວາ 2022 ທ່ານ ແຫວນຄຳ ປະທຸມມະແສງ ປະທານກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໄດ້ເຄື່ອນໄຫວ ແລະ ເຮັດວຽກຢູ່ເມືອງສະໜາມໄຊ ໂດຍການຕ້ອນຮັບຂອງຄະນະປະຈຳພັກເມືອງ, ຮອງເຈົ້າເມືອງ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງສະໜາມໄຊ ແລະ ຫ້ອງການກ່ຽວຂ້ອງ.**

ໂອກາດດັ່ງກ່າວ ໄດ້ຮັບຟັງການລາຍງານຈາກຄະນະປະຈຳພັກເມືອງ, ຮອງເຈົ້າເມືອງສະໜາມໄຊ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໃນຂົງເຂດວັດທະນະທຳ-ສັງຄົມ ໂດຍສະເພາະແມ່ນຕິດພັນກັບວຽກງານສຶກສາ, ສາທາລະນະສຸກ ແລະ ວຽກງານອື່ນໆທີ່ຕິດພັນ. ພ້ອມນັ້ນ, ທ່ານ ແຫວນຄຳ ປະທຸມມະແສງ ຍັງໄດ້ເຈາະຈີ້ມຫ້ອງການກ່ຽວຂ້ອງ ບາງບັນຫາທີ່ຂະແໜງການກ່ຽວຂ້ອງໄດ້ຈັດຕັ້ງປະຕິບັດໃນໄລຍະຜ່ານມາ ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດຄາດໝາຍ ແລະ ເປັນຂໍ້ມູນພື້ນຖານທີ່ຈະກະກຽມນຳເຂົ້າກອງປະຊຸມຄົບຄະນະ ປະຈຳປີ 2022 ໃນຂົງເຂດວັດທະນະທຳ-ສັງຄົມ ແລະ ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງອັດຕະປື ຊຸດທີ II ໃຫ້ມີເນື້ອໃນຄົບຖ້ວນຮັດກຸມ ແລະ ສອດຄ່ອງກັບການຈັດຕັ້ງປະຕິບັດວຽກງານຕົວຈິງ.

ໂອກາດດຽວກັນນີ້, ຍັງໄດ້ສົມທົບກັບຄະນະປະຈຳພັກເມືອງ, ຮອງເຈົ້າເມືອງ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງ, ເຄື່ອນໄຫວຕິດຕາມຊຸກຍູ້ວຽກງານສາສະໜາຢູ່ບ້ານກະແຊະ ເມືອງສະໜາມໄຊ ພ້ອມທັງນຳເອົາເຂົ້າສານ ແລະ ເຄື່ອງນຸ່ງຫົ່ມຈຳນວນໜຶ່ງ ໄປມອບໃຫ້ອຳນາດການປົກຄອງບ້ານ ເພື່ອມອບຕໍ່ໃຫ້ຄອບຄົວທຸກຍາກທີ່ນອນໃນເປົ້າໝາຍ.



( ນັກຂ່າວ ສພຂ ອັດຕະປື )

## ພົບປະແລກປ່ຽນບົດຮຽນ ລະຫວ່າງ ຫ້ອງວ່າການແຂວງ ແລະ ຄະນະເລຂາທິການ



(ສພຊ) ໃນຕອນແລງຂອງວັນທີ 27 ທັນວາ 2022 ຢູ່ທີ່ຫ້ອງປະຊຸມຫ້ອງວ່າການແຂວງຫົວພັນ ໄດ້ເປີດກອງປະຊຸມພົບປະ ແລກປ່ຽນບົດຮຽນລະຫວ່າງຫ້ອງວ່າການແຂວງ ແລະ ຄະນະເລຂາທິການສະພາປະຊາຊົນແຂວງ ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ອານຸເດດ ສີຄຳໄຊ ຫົວໜ້າຫ້ອງວ່າການແຂວງຫົວພັນ ແລະ ທ່ານ ຄຳຟອງ ກົ້ວມີໄຊ ເລຂາທິການສະພາປະຊາຊົນແຂວງຫົວພັນ; ມີບັນດາທ່ານຮອງເລຂາທິການ, ຮອງຫົວໜ້າຫ້ອງວ່າການ, ຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫຼອດຮອດພະນັກງານ-ລັດຖະກອນທັງສອງພາກສ່ວນເຂົ້າຮ່ວມ.



ໃນວາລະກອງປະຊຸມ ໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານປະຈຳປີ 2022 ຈາກຜູ້ຕາງໜ້າທັງສອງພາກສ່ວນ ຈາກນັ້ນ, ໄດ້ພ້ອມກັນແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງກົງໄປກົງມາ ເພື່ອໃຫ້ຮັບຮູ້, ເຂົ້າໃຈແຈ້ງກ່ຽວກັບໜ້າທີ່ພາລະບົດບາດ, ການເຄື່ອນໄຫວວຽກງານຂອງກັນແລະກັນ ເພື່ອນຳມາເປັນບົດຮຽນໃນການປັບປຸງວຽກງານ, ຂອດການປະສານງານໃນການເປັນເສນາທິການໃຫ້ແກ່ການນຳຂອງຕົນ ກໍຄືວຽກງານຂອງທັງສອງຝ່າຍໃຫ້ມີຄວາມເປັນເອກະພາບໄປໃນທິດທາງດຽວກັນ ແລະ ໄດ້ຮັບການພັດທະນາດີຂຶ້ນເປັນກ້າວໆ.

ຕອນທ້າຍ, ປະທານກອງປະຊຸມ ຍັງໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ເຊິ່ງທ່ານສະແດງຄວາມຍ້ອງຍໍຊົມເຊີຍ ແລະ ໄດ້ຕີລາຄາສູງຕໍ່ຜົນສຳເລັດການຈັດຕັ້ງປະຕິບັດວຽກງານຂອງ 2 ພາກສ່ວນໃນໄລຍະຜ່ານມາ ດ້ວຍຄວາມຮັບຜິດຊອບສູງ ແລະ ມີຜົນສຳເລັດໃນຫຼາຍໆດ້ານ ພ້ອມນັ້ນ, ທ່ານຍັງໄດ້ເນັ້ນໜັກໃຫ້ທັງສອງພາກສ່ວນພ້ອມກັນເອົາໃຈໃສ່ໃນການປະຕິບັດໜ້າທີ່ວຽກງານຂອງຕົນດ້ວຍຄວາມຮັບຜິດສູງ, ກຳຈັດບັນດາຈຸດອ່ອນ ຂໍ້ຄົງຄ້າງໃຫ້ໝົດໄປ ພ້ອມທັງເສີມຂະຫຍາຍດ້ານດີຜົນງານ, ບົດຮຽນທີ່ຖອດຖອນໄດ້ ເພື່ອນຳໄປປັບປຸງກົນໄກການປະສານງານແບບແຜນວິທີເຮັດວຽກທັງສອງພາກສ່ວນໃຫ້ສອດຄ່ອງກົມກຽວ ແລະ ທັນສະໄໝເທື່ອລະກ້າວ, ສືບຕໍ່ສ້າງເງື່ອນໄຂພົວພັນປະສານງານ ແລກປ່ຽນວຽກງານຮອບດ້ານເຊິ່ງກັນແລະກັນໃຫ້ນັບມື້ນັບດີຂຶ້ນເລື້ອຍໆ.

(ບຸນແຜງ ຜຸຍພັກດີ)



## ສະພາປະຊາຊົນແຂວງໄຊຍະບູລີ ໄດ້ຮັບຫຼຽນໄຊແຮງງານຊັ້ນ I

(ສພຊ) ໃນວັນທີ 20 ທັນວາ 2022 ຢູ່ທີ່ສະໂມສອນໃຫຍ່ຂອງແຂວງໄຊຍະບູລີ, ທ່ານ ນາງ ວິລະພອນ ທອງພິມ ຮອງປະທານສະພາປະຊາຊົນແຂວງໄຊຍະບູລີ ໄດ້ຕາງໜ້າກົມກອງ ແລະ ບຸກຄົນ ຂຶ້ນຮັບຫຼຽນໄຊແຮງງານໃນພິທີປະດັບຫຼຽນນາມມະຍົດ, ຫຼຽນໄຊແຮງງານ ຊັ້ນ I, II, III, ຫຼຽນກາແຮງງານ, ໃບຍ້ອງຍໍລັດຖະບານໃຫ້ບຸກຄົນ, ກົມກອງ, ບ້ານ, ຄອບຄົວ ແລະ ຜູ້ປະກອບການທີ່ມີຜົນງານດີເດັ່ນໃນການປະກອບສ່ວນເຂົ້າໃນວຽກງານກໍ່ສ້າງຮາກຖານການເມືອງ ພັດທະນາຊົນນະບົດຮອບດ້ານ ແກ້ໄຂຄວາມທຸກຍາກ ຕິດພັນກັບວຽກງານ 3 ສ້າງ ແຕ່ປີ 2016-2021 ເຊິ່ງພິທີມອບ-ຮັບຄັ້ງນີ້ ສະພາປະຊາຊົນແຂວງໄຊຍະບູລີ ໄດ້ຮັບຫຼຽນໄຊແຮງງານຊັ້ນ I ແລະ ທ່ານ ນາງ ວິລະພອນ ທອງພິມ ຮອງປະທານສະພາປະຊາຊົນແຂວງໄຊຍະບູລີ ໄດ້ຮັບຫຼຽນໄຊແຮງງານຊັ້ນ II; ເຂົ້າຮ່ວມມີທ່ານ ພົງສະຫວັນ ສິດທະວົງ ເຈົ້າແຂວງແຂວງໄຊຍະບູລີ, ມີຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ, ກົມກອງ, ນັກປະຕິວັດອາວຸໂສບຳນານ, ເຈົ້າເມືອງ-ຮອງເຈົ້າເມືອງ, ນັກທຸລະກິດ, ຜູ້ປະກອບການ, ພະນັກງານຫຼັກແຫຼ່ງຂອງແຂວງ, ເມືອງ 11 ເມືອງເຂົ້າຮ່ວມ.



ໃນພິທີ, ທ່ານ ສີລິວັດທະນາ ສົມພັນ ຫົວໜ້າພະແນກພາຍໃນແຂວງ ໄດ້ຂຶ້ນຜ່ານມະຕິຕົກລົງຂອງກົມການເມືອງສູນກາງພັກ, ລັດຖະດຳລັດປະທານປະເທດ ແລະ ດຳລັດຂອງລັດຖະມົນຕີ ສະບັບເລກທີ 365/ນຍ, ລົງວັນທີ 14 ກັນຍາ 2022 ໂດຍປະຕິບັດຕາມມະຕິຕົກລົງກົມການເມືອງສູນກາງພັກ ວ່າດ້ວຍການເພີ່ມທະວີວຽກງານແຂ່ງຂັນ-ຍ້ອງຍໍ ໃນໄລຍະໃໝ່ ສະບັບເລກທີ 01/ກມສ, ລົງວັນທີ 7 ມັງກອນ 2010; ລັດຖະດຳລັດປະທານປະເທດວ່າດ້ວຍການເປີດຂະບວນການແຂ່ງຂັນ-ຍ້ອງຍໍໃນໄລຍະໃໝ່ ສະບັບເລກທີ 011/ປປທ, ລົງວັນທີ 20 ມັງກອນ 2010, ມະຕິຕົກລົງຂອງຄະນະປະຈຳພັກແຂວງ ສະບັບເລກທີ 001/ຄພຂ.ຊຍ, ລົງວັນທີ 13 ມັງກອນ 2013; ດຳລັດວ່າດ້ວຍການແຂ່ງຂັນ ແລະ ຍ້ອງຍໍ ສະບັບເລກທີ 116/ລບ, ລົງວັນທີ 22 ເມສາ 2019 ແລະ ແຈ້ງການກະຊວງພາຍໃນ ກ່ຽວກັບສະຫຼຸບ, ຕີລາຄາ, ປະເມີນຂະບວນການແຂ່ງຂັນຮັກຊາດ, ສ້າງບ້ານພັດທະນາ, ຜັນຂະຫຍາຍວຽກງານ 3 ສ້າງເຂົ້າສູ່ລວງເລິກ ສະບັບເລກທີ 37/ພນ, ລົງວັນທີ 7 ກຸມພາ 2020 ແລະ ການສະຫຼຸບຕີລາຄາຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ໃນຂອບເຂດທົ່ວແຂວງໃນຄັ້ງວັນທີ 4 ກັນຍາ 2020.



ຜ່ານການສະຫຼຸບ, ຕີລາຄາ ແລະ ປະເມີນຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາບັນດາພະແນກການ, ອົງການ, ກຳລັງປະກອບອາວຸດ, ຂັ້ນແຂວງ, ຂັ້ນເມືອງ ແລະ ຮາກຖານບ້ານໃນຂອບເຂດທົ່ວແຂວງ ຈຳນວນ 254 ພາກສ່ວນ ທີ່ໄດ້ເຂົ້າຮ່ວມການປະເມີນ (ໃນນີ້ ມີ33 ພະແນກການ, 2 ອົງຄະນະພັກກຳລັງປະກອບອາວຸດ, 11 ເມືອງ ແລະ 208 ບ້ານ) ໄດ້ສະເໜີເຖິງຄະນະກຳມະການລະດັບຊາດ ເພື່ອຄົ້ນຄວ້າພິຈາລະນາຕາມຂໍ້ຕົກລົງຂອງທ່ານເຈົ້າແຂວງສະບັບເລກທີ 084/ຈຂ.ຊຍ, ລົງວັນທີ 23 ເມສາ 2020, ຜ່ານການຄັດເລືອກຂອງຄະນະກຳມະການລະດັບຊາດ ເຊິ່ງໄດ້ປະກາດຮັບຮອງໃນກອງປະຊຸມທົ່ວປະເທດໃນຄັ້ງວັນທີ 14-16 ກັນຍາ 2022 ທົ່ວແຂວງໄຊຍະບູລີຄັດເລືອກໄດ້ຜົນງານດີເດັ່ນຂອງບຸກຄົນ, ນິຕິບຸກຄົນ, ກົມກອງລວມໝູ່, ບ້ານ, ຄອບຄົວຕົວແບບ, ຜູ້ປະກອບການດີເດັ່ນ, ນັກພັດທະນາກອນ, ພະນັກງານ-ລັດຖະກອນທີ່ໄດ້ປະກອບສ່ວນເຂົ້າໃນຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນ ມີບຸກຄົນຈຳນວນ 3.463 ທ່ານ, 35 ກົມກອງ, 11 ເມືອງ, 208 ບ້ານ, 51 ຄອບຄົວ ແລະ 40 ຄອບຄົວຕົວແບບ.

ຕາມລັດຖະດຳລັດຂອງປະທານປະເທດ ສະບັບເລກທີ 56 /ປປທ, ລົງວັນທີ 14 ກັນຍາ 2022 ແລະ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 365/ນຍ, ລົງວັນທີ 14 ກັນຍາ 2022 ໃນນີ້ ໄດ້ຮັບຫຼຽນໄຊແຮງງານຊັ້ນ I ຈຳນວນ 81 ທ່ານ, 7 ກົມກອງ ແລະ 8 ບ້ານ, ຫຼຽນໄຊແຮງງານຊັ້ນ II ຈຳນວນ 140 ທ່ານ, 3 ກົມກອງ ແລະ 12 ບ້ານ, ຫຼຽນໄຊແຮງງານຊັ້ນ III ຈຳນວນ 331 ທ່ານ, 9 ກົມກອງ, 9 ເມືອງ, 16 ບ້ານ ແລະ 1 ຄອບຄົວ, ຫຼຽນກາແຮງງານຈຳນວນ 753 ທ່ານ, 16 ກົມກອງ, 2 ເມືອງ, 36 ບ້ານ, 7 ຄອບຄົວ ແລະ 4 ຜູ້ປະກອບການ, ໃບຍ້ອງຍໍລັດຖະບານ ຈຳນວນ 2.158 ທ່ານ, 136 ບ້ານ, 43 ຄອບຄົວ ແລະ 36 ຜູ້ປະກອບການ ໂດຍການຂຶ້ນປະດັບຫຼຽນໄຊແຮງງານຊັ້ນ I, II, III, ຫຼຽນແຮງງານ ແລະ ໃບຍ້ອງຍໍຂອງລັດຖະບານ ແມ່ນທ່ານ ພົງສະຫວັນ ສິດທະວົງ ເຈົ້າແຂວງແຂວງໄຊຍະບູລີ ແລະ ທ່ານ ດວງຕາ ໄຊວຸດ ຮອງເລຂາພັກແຂວງໄຊຍະບູລີ.

(ອິນທີ ຊຽວສີຟ້າ)






# ສັນຍານອັນຕະລາຍ ສ່ຽງຫົວໃຈວາຍ

• ສາວແວ່ນ

**ອາການຫົວໃຈວາຍ ຫຼື ຫົວໃຈລົ້ມເຫຼວ** ເກີດຈາກການເຮັດວຽກຜິດປົກກະຕິຂອງຫົວໃຈ ເຮັດໃຫ້ບໍ່ສາມາດສູບເລືອດໄປລ້ຽງສ່ວນຕ່າງໆໄດ້ພຽງພໍ ຄວາມຮຸນແຮງ ມີທັງແບບກະທັນຫັນ ແລະ ຊໍາເຮື້ອ ດັ່ງນັ້ນ, ສິ່ງສໍາຄັນ ຄວນຈະສັງເກດອາການ ເພາະຫົວໃຈເປັນອະໄວຍະວະທີ່ເມື່ອເຈັບປ່ວຍແລ້ວລໍຖ້າບໍ່ໄດ້ ການຮູ້ໄວ ກໍຈະຊ່ວຍໃຫ້ດູແລຮັກສາໄດ້ຢ່າງຖືກຕ້ອງ ແລະ ຫຼຸດຄວາມສ່ຽງຕໍ່ການເສຍຊີວິດຍ້ອນຫົວໃຈວາຍໄດ້ຫຼາຍຂຶ້ນ.

**ພະຍາດຫົວໃຈວາຍ** ອາດເກີດໄດ້ຈາກຫຼາຍສາເຫດ ເຊັ່ນ: ເສັ້ນເລືອດຫົວໃຈຕີບ ຫຼື ຕັນແບບກະທັນຫັນ ຈຶ່ງເຮັດໃຫ້ກ້າມເນື້ອຫົວໃຈຕາຍ ສົ່ງຜົນໃຫ້ການບີບໂຕຂອງຫົວໃຈຫຼຸດລົງ; ລີ້ນຫົວໃຈຜິດປົກກະຕິ ເຊັ່ນ: ເສັ້ນເລືອດຫົວໃຈຕີບຮຸນແຮງ ເຮັດໃຫ້ການຮັບ-ສົ່ງເລືອດຂອງຫົວໃຈຫຼຸດລົງ; ກຸ່ມພະຍາດໄທຣອຍ ເຊັ່ນ ໄທຣອຍເປັນພິດ ແລະ ແມ່ຍິງທີ່ມີອາການຄັນເປັນພິດ; ສະນັ້ນ, ໃນຄໍລໍາ **ສຸກສະບາຍຫາຍໂລຄາ** ສະບັບນີ້ ເຮົາມີ 3 ອາການທີ່ອາດຈະເປັນສັນຍານເຕືອນວ່າຫົວໃຈຂອງທ່ານກໍາລັງຈະວາຍ ຫຼື ລົ້ມເຫຼວ ຄື:



**- ເມື່ອຍງ່າຍ :**

ອາດຈະບົ່ງບອກວ່າ ປະສິດທິພາບການເຮັດວຽກຂອງຫົວໃຈໜ້ອຍລົງ ຄວາມຮຸນແຮງຂອງພະຍາດມັກຈະກ່ຽວຂ້ອງກັບກິດຈະກໍາທີ່ເຮັດ ຖ້າທ່ານມີອາການເມື່ອຍຢູ່ຕະຫຼອດເວລາ ນັ້ນອາດໝາຍເຖິງຄວາມຜິດປົກກະຕິທີ່ຮຸນແຮງ.

**- ແສບ ເຈັບສຽບ ແລະ ແໜ້ນໜ້າເອິກ:**

ອາການນັ້ນອາດບົ່ງບອກໃຫ້ຮູ້ວ່າ ຫົວໃຈຂາດເລືອດໄປຫຼໍ່ລ້ຽງສ່ວນຫຼາຍມັກຈະຮູ້ສຶກແໜ້ນກາງໜ້າເອິກ ອາດຈະມີອາການປວດຈາກຕົ້ນຄໍຂຶ້ນໄປຫາຄາງກະໄຕ, ມີອາການເຄັ່ງໆຕຶງໆ, ມຶນຊາ, ແຕ່ບ່າໄຫຼ່ໄປເຖິງຕົ້ນແຂນ ຮູ້ສຶກຄືມີແນວໜັກໆມາເຕັງ ຖ້າອາການເຫຼົ່ານີ້ເປັນດົນກວ່າ 20 ນາທີ ອາດສົ່ງຜົນໃຫ້ກ້າມເນື້ອຫົວໃຈຕາຍ ເຮັດໃຫ້ປະສິດທິພາບຂອງຫົວໃຈຫຼຸດລົງ.

**- ບໍ່ສະບາຍໂຕເວລານອນ:**

ຈະຮູ້ສຶກບໍ່ສະບາຍໂຕເວລານອນຫງາຍ ອາດຈະເປັນສັນຍານທີ່ບົ່ງບອກວ່າ ປະລິມານນໍ້າໃນຫົວໃຈເພີ່ມຂຶ້ນຈາກການເຮັດວຽກຂອງຫົວໃຈຜິດປົກກະຕິຂ້ອນຂ້າງຮຸນແຮງ.

www.sanook.com

---

ວາດ ກະວີລາວ

# ທະຫານ ກັບ ປະຊາຊົນ

• ຫຼານເຈົ້ານ້ອຍ

❖ ຫາກໄຮ່ນາປູກເຂົ້າ
ຄັນບໍ່ມີຮາວກັນ
ເຂົ້າໃນນາກໍແປນກ້ຽງ
ເຂົ້າພຽງກໍາກອບໄດ

ພັນພືດທັນຍາຫານ
ໝາກະບີບິນເຂົ້າ
ຕີນຄູ້ວາຍຍີຍໍ່າ
ບໍ່ພໍລ້ຽງຄອບຄົວ ດອກນາ

❖ *ຄັນວ່າ ຮົ້ວບໍ່ແໜ້ນ*
*ແມ່ນຊິມີຮາວສູງ*
*ຝູງໝູງົວຄວາຍຊ້າງ*
*ບໍ່ຄົງທົນຢູ່ໄດ້*

*ເສົາໂຄ່ນຄອນູແຄນ*
*ສໍາໃດ ກໍເພນ້າງ*
*ມາພັງຖອນກິນ*
*ກັນເຂົ້າຢູ່ນາ*

❖ ໄຮ່ນາປູນປຽບໄດ້
ຮົ້ວຮາວຄືທະຫານ
ປະຄອງອານຸນາໄວ້
ບໍ່ໃຫ້ໄພແລ່ນຕ້ອງ

ຜືນແຜ່ນດິນລາວ
ທີ່ຄອຍປົກປ້ອງ
ທົນຄົງຂະນົງແກ່ນ
ຈອງຫອງເຂົ້າຄອບຄອງ

❖ *ລາວທັງຜອງຈຶ່ງໄດ້*
*ຮັກດັ່ງດຽວດວງຕາ*
*ດັ່ງລູກຕົນໃນໄສ້*
*ຂໍອ້າສາຫຼໍ່ລ້ຽງ*

*ອາໄສເພິ່ງພາທະຫານ*
*ຄາແພງຫຼາຍລົ້ນ*
*ດວງໃຈຫອມທໍ່*
*ແມ່ນມີພຽງແຕ່ເຂົ້າ*
*ກໍານ້ອຍກໍແບ່ງປັນ*

❖ ສາຍສໍາພັນແນບແໜ້ນ
ບໍ່ມີວັນເພພັງ
ບ່ອນໃດມີໄພຮ້າຍ
ມີປະຊາຊ່ອຍຊ່ວານ

ແຂງແກ່ນໂດຍທົນ
ເສື່ອມສະຫຼາຍລົງໄດ້
ທະຫານຕາມຕີ້ຕອຍ
ຖະໜອມລ້ຽງລໍາແລ ຊອບແລ້ວ

---




• ສາວລົ້ມ

( ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ )

❖ **ສົ່ງທ້າຍປີເກົ່າ ຕ້ອນຮັບປີໃໝ່** ດ້ວຍບັນຍາກາດຜົນສໍາເລັດກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຜູ້ແທນປະຊາຊົນລາວຂອງພວກເຮົາ ກັບເວລາ 20 ວັນໃນການເຮັດໜ້າທີ່ເປັນຕົວແທນໃນກອງປະຊຸມຄັ້ງນີ້ ພິທີໄຂ ເລີ່ມວັນທີ 5 ທັນວາ ດໍາເນີນມາຈົນເຖິງ ມື້ວັນທີທ້າຍ ເປັນແນວໃດ ຕອນນີ້ **ຜູ້ແທນດີ ວາລາເດີ່ນ** ທຸກທ່ານ ກັບສູ່ເຮືອນຮອດບ້ານ ຄົງຫົວເຍັ້ນຊື່ນບານ ແລ້ວບໍ່!

❖ ປີເກົ່າກາຍຜ່ານພົ້ນ ປີໃໝ່ມາແທນ ຂໍອວຍພອນແຟນຄລັບ ເພື່ອນສະຫາຍຄ່ລ່ານີ້ ຈົ່ງສຸຂີລວຍລົ້ນ ສົມຫວັງມະໂນນຶກ ທັງການງານສຸຂະພາບພ້ອມ ເງິນຄໍາລົ້ນອັ່ງດັງ ເດີທ່ານເອີຍ!

❖ **ຂົມຂື່ນວັນສ້າງຕັ້ງກອງທັບປະຊາຊົນລາວ** ທີ່ໄດ້ໝູນວຽນມາບັນລົບຄົບຮອບ 70 ປີ (20 ມັງກອນ 1949 – 20 ມັງກອນ 2023 ) 74 ປີເອກອ້າງ ກອງທັບປະຊາຊົນລາວ ຊາວປະຊາດີໃຈ ຊື່ນຊົມຍ່ອງຍ້ອງ ກອງກໍາລັງບ່າໜ້າ ຮັກສາປົກປ້ອງແຜ່ນ ທໍລະນີເຂດແຄວັນ ແດນລາວນີ້ຄົງຮຸ່ງເຮືອງ ບົ້ນແລ້ວ!

---




## ບໍ່ຢ້ານເມຍ

• ແອ່ນຕຸ້ງ

ເນື່ອງໃນໂອກາດສະຫລອງວັນກອງທັບ ໄດ້ມີການສວນສະໜາມ, ໃນມື້ນັ້ນ ຊິມີບັນດາລູກເມຍທະຫານໄປນັ່ງຊົມ. ຫຼັງຈາກພິທີທາງການແລ້ວ, ເພື່ອເປັນການສ້າງບັນຍາກາດ, ຫົວໜ້າກອງກໍາລັງໄດ້ຮຽກຮ້ອງໃຫ້ຈັດທົວແຖວໃໝ່ ແລະ ອອກຄໍາສັ່ງວ່າ:

**ນາຍທະຫານ :** ທັງໝົດກົງ ! ໃຜຢ້ານເມຍ ມາຢືນຢູ່ແຖວເບື້ອງຊວາ ໃຜບໍ່ຢ້ານ ໃຫ້ຢືນຢູ່ບ່ອນເກົ່າ. ທະຫານເກືອບໝົດທຸກຄົນ ພາກັນຍ້າຍໄປຢູ່ເບື້ອງຊວາ, ຍັງເຫຼືອແຕ່ສະຫາຍເລີດຄົນດຽວທີ່ບໍ່ໄປ.

**ທ່ານນາຍພັນ :** ສະຫາຍເລີດ ຄືບໍ່ມາເບື້ອງຊວາ ບໍ່ຢ້ານເມຍບໍ່ ?

**ສະຫາຍເລີດ :** ເມຍບອກໃຫ້ຢືນຢູ່ບ່ອນເກົ່າ.

**ທ່ານນາຍພັນ :** ໂອ !!!!

---

## ສຸພາສິດ – ຄໍາຄົມ

• ດອກຫຍ້າ

ການທີ່ທໍາດີນັ້ນ ໃຜບໍ່ຍໍກໍຕາມຊ່າງ
ອັນວ່າທໍາຊົ່ວຊ້າ ໃຜຍ້ອງກໍຢ່າທໍາ

# ການສ້າງກອງທັບ ໃຫ້ໜັກແໜ້ນທາງດ້ານການເມືອງ-ແນວຄິດ





**ວຽກງານການເມືອງ-ແນວຄິດ ແມ່ນສະໜາມຮົບແຖວໜ້າໃນການສ້າງສະຖານະພາບ ແລະ ຄວາມສະຫງົບໃຫ້ໜັກແໜ້ນ, ຍ້ອນວ່າວຽກງານການເມືອງ-ແນວຄິດ ຍາມໃດກໍເປັນໜ້າທີ່ພື້ນຖານ ເປັນວຽກງານກົກ, ສອດທ້ອຍໄປນຳທຸກອົງເຂດວຽກງານທີ່ມີການນຳພາຂອງພັກທຸກເວລາ ແລະ ເປັນປັດໄຈສຳຄັນຕົ້ນຕໍ ຮັບປະກັນໃຫ້ມີຄວາມສຳເລັດ ແລະ ໄຊຊະນະ ໃນການເຄື່ອນໄຫວນຳພາ ພາລະກິດປະຕິວັດຂອງປະເທດເຮົາ.**

ຕໍ່ໜ້າສະພາບການປັດຈຸບັນ ຖ້າຢາກປັບປຸງກອງທັບໃຫ້ໜັກແໜ້ນເຂັ້ມແຂງທາງດ້ານການເມືອງ-ແນວຄິດ, ກ່ອນອື່ນໝົດ ຕ້ອງເຮັດໃຫ້ນາຍ ແລະ ພົນທະຫານ ຮັບຮູ້-ເຂົ້າໃຈ ແລະ ເຊື່ອມຊຶມຕໍ່ແນວທາງນະໂຍບາຍຂອງພັກ, ມີຄວາມບໍລິສຸດຕໍ່ພັກ, ຮູ້ບຸນຄຸນພັກ ແລະ ສູ້ຊົນປະຕິບັດມະຕິຕ່າງໆຂອງພັກໃຫ້ປາກົດຜົນເປັນຈິງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ; ກອງທັບເຮົາຍາມໃດກໍຖືວຽກງານການເມືອງ-ແນວຄິດ ເປັນໜຶ່ງໃນສີ່ປັດໄຈທີ່ເປັນກຳລັງແຮງສັງລວມໃນການປັບປຸງກໍ່ສ້າງກຳລັງປະກອບອາວຸດໃຫ້ໜັກແໜ້ນ ເຂັ້ມແຂງ ເພື່ອກຽມພ້ອມສູ້ຮົບ ແລະ ສູ້ຮົບມີໄຊໃນທຸກໄລຍະຂອງການປະຕິວັດ, ສ້າງພະນັກງານ-ນັກຮົບໃຫ້ມີຄຸນທາດການເມືອງ, ມີຈິດໃຈປະຕິວັດ, ມີອຸດົມການຖືກຕ້ອງ ແລະ ຈຳແນກມິດ-ສັດຕູຢ່າງຈະແຈ້ງ ການກໍ່ສ້າງກອງທັບໃຫ້ໜັກແໜ້ນ ແລະ ເຂັ້ມແຂງທາງດ້ານການເມືອງ-ແນວຄິດ ຕ້ອງເອົາໃຈໃສ່ບາງບັນຫາລຸ່ມນີ້:

**ໜຶ່ງ:** ປັບປຸງອົງການຈັດຕັ້ງພັກໃນກອງທັບໃຫ້ເຂັ້ມແຂງ ໂດຍມີຄະນະພັກກະຊວງເປັນກົງຈັກໃຫຍ່ ປະຕິບັດຫຼັກການນຳພາໂດຍກົງ, ຮອບດ້ານ ຍົກສູງປະສິດທິພາບຂອງການປະຕິບັດຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ ບຸກຄົນຮັບຜິດຊອບ ຕິດແໜ້ນກັບການສຶກສາ ບຳລຸງລະດັບການສຶກສາ ຂອງການຈັດຕັ້ງພັກທຸກຂັ້ນ, ພະນັກງານ-ນັກຮົບ ກໍຄືສະມາຊິກພັກທຸກສະຫາຍໃນກອງທັບ ເປັນ



ຕົ້ນແມ່ນພະນັກງານ-ສະມາຊິກພັກຜູ້ມີໜ້າທີ່ຕຳແໜ່ງສູງ ຍິ່ງຕ້ອງໄດ້ເອົາໃຈໃສ່.

**ສອງ:** ຈັດຕັ້ງປັບປຸງໂຄງປະກອບພະນັກງານບັນຊາ, ພະນັກງານການເມືອງກອງທັບ ພາຍໃຕ້ການນຳພາລວມສູນເປັນເອກະພາບຂອງຄະນະພັກທຸກຂັ້ນ, ໃນທີ່ນີ້ ຄວນໄຈ້ແຍກແຈ້ງຄວາມແຕກຕ່າງລະຫວ່າງລະບອບບັນຊາຫົວໜ້າດຽວ ແລະ ລະບົບສອງຫົວໜ້າການທະຫານ, ການເມືອງ ເຊິ່ງມີການແບ່ງຄວາມຮັບຜິດຊອບໃນດ້ານວຽກງານ ແລະ ບໍ່ຄວນເຂົ້າໃຈວ່າແມ່ນການແບ່ງສິດອຳນາດ.

**ສາມ:** ການປັບປຸງຖັນແຖວພະນັກງານ-ນັກຮົບ ບົນພື້ນຖານຂໍ້ກຳນົດມາດຖານດ້ານຄຸນທາດການເມືອງ, ຄຸນສົມບັດ, ຄວາມຮູ້-ຄວາມສາມາດ, ສຸຂະພາບ ແລະ ໜ້າທີ່ ທີ່ໄດ້ມອບໝາຍ ເພື່ອຕີລາຄາພະນັກງານ-ນັກຮົບ; ຄວນມີສາຍຕາເບິ່ງທີ່ກວ້າງໄກ ໃນການຕີລາຄາກໍ່ສ້າງພະນັກງານ ຍ້ອນວ່າການບຳລຸງສ້າງພະນັກງານ- ນັກຮົບ ກໍແມ່ນວຽກງານໜຶ່ງທີ່ສຳຄັນ ແຕ່ວຽກງານດັ່ງກ່າວກໍເປັນວຽກງານໜຶ່ງທີ່ຕ້ອງໄດ້ເອົາໃຈໃສ່ເປັນພິເສດ, ຖ້າໃຊ້ພະນັກງານ-ນັກຮົບບໍ່ຖືກຕ້ອງ ກໍຈະເຮັດໃຫ້ເສຍວຽກ ເສຍບຸກຄະລາກອນການຄຸ້ມຄອງ, ການບຳລຸງສ້າງ ແລະ ການນຳໃຊ້ພະນັກງານ-ນັກຮົບດີ ມີປະສິດທິຜົນນັ້ນ ຈະຮັບປະກັນການສ້າງຮຸ່ນສືບທອດຢ່າງຕໍ່ເນື່ອງ.

**ສີ່:** ການປັບປຸງ ຍົກລະດັບຄຸນນະພາບຂອງການເຄື່ອນໄຫວວຽກງານການເມືອງ-ແນວຄິດ ໃນກຳລັງປະກອບອາວຸດ ເປັນຕົ້ນແມ່ນບັນຫາການສຶກສາອົບຮົມການເມືອງ-ແນວຄິດ, ຄວາມຮູ້, ວິຊາສະເພາະ, ວິຊາການຕ່າງໆ ເພື່ອໃຫ້ພະນັກງານນັກຮົບເຂົ້າໃຈ ແລະ ເຊື່ອໝັ້ນແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ກໍຄືຂອງກອງທັບ ໃນເງື່ອນໄຂສະພາບການຕົວຈິງຂອງຊາດ ຕິດພັນກັບການກຳນົດທິດນຳຍຸດທະສາດ ເພື່ອປັບປຸງກໍ່ສ້າງກອງທັບໃຫ້ນັບມື້ນັບທັນສະໄໝ ຕິດພັນກັບການປັບປຸງກໍ່ສ້າງກຳລັງ 3 ປະເພດຄື: ກຳລັງຫຼວງ, ກຳລັງທ້ອງຖິ່ນ ແລະ ກອງຫຼອນ, ກອງປ້ອງກັນຕົວ; ຮັບປະກັນດ້ານງົບປະມານຕໍ່ວຽກງານປ້ອງກັນຊາດເວົ້າລວມ, ເວົ້າສະເພາະຕໍ່ກອງທັບ ພ້ອມທັງເອົາໃຈໃສ່ປັບປຸງຍົກສູງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈໃຫ້ແກ່ນາຍ ແລະ ພົນທະຫານ ໃຫ້ສົມຄູ່ກັບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ, ການກໍ່ສ້າງກອງທັບໃຫ້ເຂັ້ມແຂງທາງດ້ານການເມືອງ-ແນວຄິດ ແມ່ນຄວາມຈຳເປັນພາລະວິໄສ ບໍ່ວ່າໃນຍາມສົງຄາມ ຫຼື ຍາມສະຫງົບສຸກ ກໍຮຽກຮ້ອງຕ້ອງການໃຫ້ພະນັກງານ-ນັກຮົບ ກໍຄືນາຍ ແລະ ພົນທະຫານທຸກຄົນ ຕ້ອງປັບປຸງກໍ່ສ້າງກຳລັງປະກອບອາວຸດໃຫ້ເຂັ້ມແຂງ ຕິດພັນກັບການຝຶກຝົນຕົນເອງໃຫ້ມີຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດອັນໜັກແໜ້ນ, ສູ້ຊົນ ຮຽນນະໂຍບາຍຂອງພັກ, ກົດໝາຍຂອງລັດ ຢ່າງບໍ່ຢຸດຢັ້ງ ຕິດພັນກັບພຶດຕິກຳຕົວຈິງຂອງປະຊາຊົນບັນດາເຜົ່າ, ມີຄວາມບໍລິສຸດຕໍ່ຊາດ, ຮັບໃຊ້ປະຊາຊົນຢ່າງສຸດໃຈ, ເສີມຂະຫຍາຍທາດແທ້ມູນເຊື້ອປະຕິວັດ, ຮັກອາຊີບ ແລະ ປະຕິບັດໜ້າທີ່ຂອງຕົນໃຫ້ດີທີ່ສຸດ ເພື່ອປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາສ້າງສາປະເທດຊາດ.

**ໂດຍ: ມ ອາລຸນໃໝ່**



---




## ຂໍ້ຄິດ ສຳລັບປີໃໝ່

• ດັ້ນກົບເມກ

ຜູ້ຂຽນຂໍສະເໜີຄຳເຫັນທີ່ວ່າ ເຮົາຈະປັບປຸງປ່ຽນແປງອັນໃດແດ່ເພື່ອຕ້ອນຮັບປີໃໝ່, ໜຶ່ງປີຜ່ານໄປ ເຮົາຄວນທົບທວນຊີວິດວ່າເຮົາໄດ້ບັນລຸເປົ້າໝາຍທີ່ຕັ້ງໄວ້ແນວໃດແດ່ ? ຍັງມີອັນໃດແດ່ທີ່ເຮັດບໍ່ໄດ້ ? ຖ້າວ່າຄົນໃດກໍຕາມ ທີ່ໃຊ້ຊີວິດຜ່ານໄປປີໜຶ່ງໂດຍປາສະຈາກເປົ້າໝາຍຊີວິດ ຫຼື ພຽງແຕ່ຄິດວ່າມີຢູ່ມີກິນໄປແຕ່ລະມື້ ຄຳຖາມເຫຼົ່ານີ້ໜ້າຄິດ ເພາະຢ່າລືມວ່າໃນໂລກໜ່ວຍນີ້ ເຮົາຈະເຮັດສິ່ງໃດກໍຕາມ ຖ້າຂາດແຜນການ, ຂາດແຜນຊີວິດ ກໍຄືງຖືກດຶງດູດພັດໄປຕາມກະແສໂລກ.

ຜູ້ຂຽນຄິດວ່າ: ຄົນເຮົາ ຄວນຕັ້ງສະຕິສັງລວມເຕືອນຕົວເອງ- ຄວບຄຸມອາລົມ ແລະ ຄວາມຄິດຕົວເອງໃຫ້ໄດ້ ເພື່ອພັດທະນາຊີວິດໃຫ້ດີຂຶ້ນກ້າວໜ້າກວ່າປີຜ່ານມາ, ມັກຟັງຄຳຕຳນິຕິຊົມ, ມັກຢູ່ໃກ້ຊິດຄົນເກັ່ງ, ມັກມີໝູ່ຄູ່ຂະຫຍັນຮ່ຳຮຽນ, ສ້າງຊີວິດ ຫຼື ວ່າຕົນເອງມີນິໄສມັກມ່ວນແຕ່ລະມື້, ມັກເຂົ້າສັງຄົມຊຸມແຊວ, ມັກທ່ຽວເລາະເມົາຕຳຈອກ, ເງິນເດືອນອອກ ເຂົ້າຮ້ານສະຫຼອງ, ນິໄສບໍ່ມັກເກັບອອມເງິນໄວ້ໃຊ້ຍາມຈຳເປັນ, ບາງຄົນ ປີໃໝ່ ຫຼື ປີເກົ່າ ກໍຍັງມີນິໄສຄືເກົ່າ ຄືຂີ້ຄ້ານ, ຄວາມຮູ້ບໍ່ສະແຫວງຫາ ເວລາເຮັດວຽກກໍມີແຕ່ຫຼິ້ນລັ້ເອົາຄວາມຄິດຂອງຄົນອື່ນ ແນວວ່າລັກຄວາມຄິດຂອງຄົນອື່ນມັນງ່າຍບໍ.

ບາງຄົນເປັນນັກຮຽນ ຍັງມີນິໄສຄືເກົ່າ ມັກກ່າຍໝູ່ ນິໄສຕັ້ງແຕ່ຮຽນ ມ.ປາຍ ບໍ່ຖິ້ມ ຢ່າລືມວ່ານິໄສກ້າວໜ້າ, ນິໄສດີ, ນິໄສຮັກການພັດທະນາ ຄົນເຮົາສາມາດສ້າງມັນຂຶ້ນໄດ້ດ້ວຍຕົວເຮົາເອງ ບໍ່ຕ້ອງລໍເທວະດາຟ້າແຖນສ້າງໃຫ້ ຫຼື ອ້ອນວອນ ຜູດຜີປີສາດໃຫ້ຊ່ວຍດົນບັນດານ.

ຜູ້ຂຽນສັງລວມວ່າ: ປີໃໝ່ 2023 ນີ້ ຜູ້ທີ່ຢາກສ້າງຕົວເອງໃຫ້ເປັນທີ່ເພິ່ງອັນປະເສີດ, ສ້າງຕົວເອງໃຫ້ເຂັ້ມແຂງ ແນ່ນອນຕ້ອງເຝິກນິໄສຮັກຄວາມກ້າວໜ້າ ຫຼີກເວັ້ນນິໄສລໍອຳນາດດົນບັນດານ, ນິໄສອ້ອນວອນສິ່ງສັກສິດບັນດານໃຫ້, ບາງຄົນແຮ່ງຄັກ ຊື້ແຕ່ຫວຍ ຫຼົງເຫີ່ສີ່ຮ້ອຍລ້ານ... ຄົນບູຮານສອນໄວ້ດີລະເດວ່າ: ສິບສະຫຼຶງຢູ່ຟາກນ້ຳ ຢ່າໂອ້ອ່າວຄະນຶງຫາ ສອງສະຫຼຶງມານີ້ ໃຫ້ຄ່ອຍກຳເອົາໄວ້ !!!-




# ກົດໝາຍ ວ່າດ້ວຍການຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງຕິດຕາມກວດກາວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດໃນທົ່ວສັງຄົມ ເພື່ອໃຫ້ວຽກງານດັ່ງກ່າວປະຕິບັດໄດ້ຢ່າງຖືກຕ້ອງ, ເປັນເອກະພາບ, ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນໃຫ້ປະເທດຊາດມີສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ການຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ**

ການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ແມ່ນການຄວບຄຸມ, ຕິດຕາມ, ກວດກາ ການປະດິດ, ດັດແປງ, ຜະລິດ, ຈຳໜ່າຍ, ຈັດຊື້, ນຳເຂົ້າ, ສົ່ງອອກ, ຂົນສົ່ງ, ນຳຜ່ານ, ນຳໃຊ້, ປົກປັກຮັກສາ, ທຳລາຍ ຫຼື ມີໄວ້ໃນຄອບຄອງອາວຸດ ແລະ ວັດຖຸລະເບີດ ເພື່ອຮັບປະກັນຄວາມສະຫງົບ ແລະ ຄວາມປອດໄພຂອງສັງຄົມ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ອາວຸດ ໝາຍເຖິງອຸປະກອນ, ເຄື່ອງມື, ພາຫະນະ ຫຼື ລະບົບພາຫະນະ ທີ່ສ້າງຂຶ້ນ ຫຼື ນຳໃຊ້ໃນການປ້ອງກັນ, ຕໍ່ສູ້, ທຳຮ້າຍ ຫຼື ທຳລາຍ, ຝຶກຊ້ອມ, ແຂ່ງຂັນກິລາ ເຊັ່ນ ອາວຸດເສິກ, ອາວຸດກິລາ ແລະ ອາວຸດພື້ນເມືອງ;

2. ວັດຖຸລະເບີດ ໝາຍເຖິງຜະລິດຕະພັນທີ່ຜະລິດຈາກທາດລະເບີດ, ເຄມີຜະລິດລະເບີດ, ອຸປະກອນກໍ່ລະເບີດ ຊຶ່ງກໍ່ໃຫ້ເກີດປະຕິກິລິຍາເຄມີຢ່າງວ່ອງໄວ, ແຮງດັນ, ພະລັງງານຄວາມຮ້ອນ, ອາຍແກັດ, ລັງສີ, ຄື້ນ, ແສງ ທີ່ເຮັດໃຫ້ເກີດສຽງລະເບີດ ເປັນຕົ້ນ ລູກລະເບີດ ແລະ ດອກໄມ້ໄຟ;

3. ທາດລະເບີດ ໝາຍເຖິງທາດເຄມີດຽວ ຫຼື ທາດເຄມີປະສົມ ທີ່ກໍ່ໃຫ້ເກີດປະຕິກິລິຍາການລະເບີດໄດ້ດ້ວຍການກະຕຸ້ນທາງກົນລະສາດ, ຄວາມຮ້ອນ, ເຄມີ ຫຼື ໄຟຟ້າ ແລະ ອື່ນໆ;

4. ເຄມີຜະລິດລະເບີດ ໝາຍເຖິງເຄມີທີ່ຖືກນຳໃຊ້ເຂົ້າໃນການຜະລິດວັດຖຸລະເບີດ;

5. ອຸປະກອນກໍ່ລະເບີດ ໝາຍເຖິງເຄື່ອງຈູດລະເບີດ, ສາຍຂະນວນ, ສາຍແຕກ, ແກັບ, ບໍ່ກຳເນີດໄຟ ຫຼື ສິ່ງອື່ນທີ່ມີຜົນກະທົບໃນການສ້າງແຮງກະຕຸ້ນເຮັດໃຫ້ລະເບີດ;

6. ດອກໄມ້ໄຟ ໝາຍເຖິງວັດຖຸທີ່ສາມາດໄໝ້ລະເບີດ ດ້ວຍການນຳເອົາໝື້ມາຫໍ່ດ້ວຍເຈ້ຍ ຫຼື ຍັດອັດໃສ່ບັ້ງ ຫຼື ຫຸ້ມຫໍ່ດ້ວຍວັດຖຸອື່ນ ທີ່ຈູດຂະນວນດ້ວຍໄຟ ຫຼື ລະບົບໄຟຟ້າ ທີ່ກໍ່ໃຫ້ມີສຽງແຕກ ຫຼື ລະເບີດ ຫຼື ພຸ່ງລຳແສງເປັນໄຟ ມີສຽງແຕກເທິງອາກາດ ເປັນຕົ້ນ ບັ້ງໄຟ, ບັ້ງໄຟດອກ ແລະ ໝາກກະໂພກ;

7. ເຄື່ອງມືຊ່ວຍໜູນ ໝາຍເຖິງອຸປະກອນ ແລະ ສັດວິຊາສະເພາະ ທີ່ນຳໃຊ້ຊ່ວຍໜູນເຂົ້າໃນການປະຕິບັດໜ້າທີ່ວຽກງານວິຊາສະເພາະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເຊັ່ນ ປືນໄຟຟ້າ, ອາຍແກັສ, ຢາສະຫຼົບ, ຕາໜ່າງ, ລູກກະສູນຢາງ, ແກັສນ້ຳຕາ, ດອກໄມ້ໄຟສັນຍານ, ລະເບີດຄວັນ, ລະເບີດນ້ຳຕາ, ຄ້ອນໄຟຟ້າ, ຄ້ອນຢາງ, ຄ້ອນເຫຼັກ, ກະແຈມື, ເຄື່ອງວາງຕະປູ ຫຼື ເຄື່ອງສະກັດຢາງຕີນລົດ, ເສື້ອເກາະກັນກະສູນ, ຖົງມືກັນມີດ, ໂລ່ກັນ, ໝວກກັນກະທົບ, ກັນລູກກະສູນ, ຊ້າງ, ມ້າ, ໝາ ແລະ ເຄື່ອງມືອື່ນ;

8. ກຳລັງປ້ອງກັນຕົວ ໝາຍເຖິງພະນັກງານ, ກຳມະກອນ, ນັກສຶກສາ ທີ່ໄດ້ຮັບການປະກອບອາວຸດ ຊຶ່ງຈັດຕັ້ງຂຶ້ນຢູ່ຕາມສຳນັກງານ ອົງການ, ສະຖາບັນການສຶກສາ, ໂຮງໝໍ, ໂຮງຈັກ, ໂຮງງານ ແລະ ສາງຄັງທີ່ເປັນຂອງລັດ ເຮັດໜ້າທີ່ປ້ອງກັນຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍພາຍໃນຂອບເຂດທີ່ຕັ້ງຂອງຕົນ;

9. ກຳລັງປ້ອງກັນຕົວ ສຳນັກງານ ອົງການ ໝາຍເຖິງພະນັກງານ, ລັດຖະກອນ ທີ່ໄດ້ຮັບການແຕ່ງຕັ້ງໃຫ້ເຮັດໜ້າທີ່ປ້ອງກັນຢູ່ສຳນັກງານ ອົງການ, ເປັນກຳລັງເຄິ່ງອາຊີບ ທີ່ຂຶ້ນກັບຂະແໜງການປ້ອງກັນຄວາມສະຫງົບ;

10. ກຳລັງປ້ອງກັນພາຍໃນ ໝາຍເຖິງພະນັກງານທີ່ໄດ້ຮັບການມອບໝາຍໃຫ້ເຮັດໜ້າທີ່ປ້ອງກັນຢູ່ບັນດາກະຊວງ, ສຳນັກງານ ອົງການ, ໂຮງງານ, ກິດຈະການອື່ນ ທີ່ຂຶ້ນກັບການຊີ້ນຳຂອງຄະນະນຳຢູ່ຂັ້ນນັ້ນ ແລະ ຄະນະນຳຂອງຂະແໜງການປ້ອງກັນຄວາມສະຫງົບ, ສຳລັບວຽກງານວິຊາສະເພາະນັ້ນ ແມ່ນຂຶ້ນກັບຂະແໜງການປ້ອງກັນຄວາມສະຫງົບ;

11. ກຳລັງຮັກສາຄວາມປອດໄພ ໝາຍເຖິງກຳລັງປ້ອງກັນຄວາມສະຫງົບເຄິ່ງອາຊີບ, ມີເຄື່ອງແບບ ແລະ ເຄື່ອງໝາຍສະເພາະ ເຮັດໜ້າທີ່ໃນການປ້ອງກັນ, ເວນຍາມຢູ່ ສຳນັກງານ ອົງການ, ໂຮງຈັກ, ໂຮງງານ, ໂຮງໝໍ, ໂຮງຮຽນ, ຫົວໜ່ວຍທຸລະກິດ, ອົງການຈັດຕັ້ງສາກົນ, ສະຖານທູດ, ສະຖານກົງສຸນ, ເຮືອນພັກຂອງຄົນຕ່າງປະເທດ ແລະ ພົນລະເມືອງລາວ ຊຶ່ງໄດ້ຮັບການສ້າງຕັ້ງ, ຍຸບເລີກ ແລະ ຢູ່ໃນການຄຸ້ມຄອງ, ຊີ້ນຳຂອງກະຊວງປ້ອງກັນຄວາມສະຫງົບ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ**

ລັດ ຊຸກຍູ້ ສົ່ງເສີມ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ຢູ່ ສປປ ລາວ ດ້ວຍການພັດທະນາໂຄງລ່າງພື້ນຖານໃຫ້ເປັນລະບົບຄົບຊຸດ, ປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ວັດຖຸປະກອນ ແລະ ເຕັກໂນໂລຊີທີ່ທັນສະໄໝ ໃຫ້ແກ່ກຳລັງປະກອບອາວຸດ.

ລັດ ເອົາໃຈໃສ່ໃນການໂຄສະນາເຜີຍແຜ່ສ້າງຈິດສຳນຶກໃຫ້ສັງຄົມຮັບຮູ້, ເຂົ້າໃຈເຖິງຄຸນປະໂຫຍດ, ຄວາມເປັນອັນຕະລາຍຂອງອາວຸດ ແລະ ວັດຖຸລະເບີດ, ຈຳກັດ, ຫຼຸດຜ່ອນຜົນກະທົບຕໍ່ຊີວິດ, ສຸຂະພາບ, ຂອງຄົນ, ສັດ, ພືດ, ຊັບສິນ ແລະ ສິ່ງແວດລ້ອມ.

**ມາດຕາ 5 ຫຼັກການ ກ່ຽວກັບວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ**

ວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດຕາມ ລັດຖະທຳມະນູນ, ກົດໝາຍ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

2. ຄຸ້ມຄອງຕິດຕາມກວດກາໂດຍກົງຂອງກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບຢ່າງລວມສູນ, ເປັນເອກະພາບ ແລະ ເຂັ້ມງວດ ໃນຂອບເຂດທົ່ວປະເທດ;

3. ປະສານສົມທົບຢ່າງກົມກຽວ ລະຫວ່າງກຳລັງປ້ອງກັນຊາດ, ກຳລັງປ້ອງກັນຄວາມສະຫງົບ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ;

4. ຮັບປະກັນຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

**ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການຄົ້ນຄວ້າທາງດ້ານວິທະຍາສາດ, ການສຶກສາ, ການສ້າງ, ບຳລຸງຊັບພະຍາກອນມະນຸດ ເພື່ອພັດທະນາວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ໃຫ້ມີຄວາມກ້າວໜ້າ ແລະ ທັນສະໄໝ ບົນພື້ນຖານຫຼັກການເຄົາລົບເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ, ບໍ່ແຊກແຊງກິດຈະການພາຍໃນ ຊຶ່ງກັນ ແລະ ກັນ, ສະເໝີພາບ, ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ແລະ ປະຕິບັດສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

( ອ່ານຕໍ່ສະບັບໜ້າ )

## ບກ ຖະແຫຼງ...

( ຕໍ່ຈາກໜ້າ 1 )

ຄະນະເລຂາທິ ການຂອງສະພາແຫ່ງຊາດ ຊຸດທີ IX ເພື່ອໃຫ້ແທດເໝາະກັບເງື່ອນໄຂ ແລະ ສະພາບການຕົວຈິງປັດຈຸບັນ ໂດຍຈະໄດ້ຈັດພິມແຈກຢາຍ 1 ສະບັບ/ອາທິດ.

ກອງບັນນາທິການ ໄດ້ສືບຕໍ່ປັບປຸງ ແລະ ເພີ່ມຕື່ມບາງຄໍລຳ ເປັນຕົ້ນແມ່ນ**ຄໍລຳເລື່ອງເດັ່ນຂ່າວເດັດ, ວາດກະວີລາວ, ອ່ານມ່ວນຊວນຍິ້ມ, ສາລະພັດບັນຫາ, ຮູ້ຂ່າວກ້າວທັນໂລກ, ຄຳຄົມສົມທີ່ຄິດ, ເບິ່ງໄວ້ໄດ້ບົດຮຽນ, ຮຽນພາສາຜ່ານສຽງທົວ ແລະ ຕາມພາສາກາຕູນ** ໂດຍໄດ້ເພີ່ມຈາກ 8 ເປັນ 12 ໜ້າ; ປັບປຸງຂະໜາດເຈ້ຍ ຈາກ 37cm x 53cm ເປັນ 29cm x 42cm.

ຄວາມບົກຜ່ອງຍ່ອມເກີດມີ ເຊິ່ງພວກເຮົາບໍ່ສາມາດຫຼີກລ່ຽງໄດ້. ສະນັ້ນ, ໃນນາມຄະນະບັນນາທິການ, ຂໍຮຽກຮ້ອງມາຍັງເພື່ອນນັກອ່ານ, ນັກຄົ້ນຄວ້າ ແລະ ຜູ້ມີຄວາມຮອບຮູ້ ຈົ່ງໃຫ້ຄວາມຮ່ວມມື ແລະ ໃຫ້ການຊ່ວຍເຫຼືອປະກອບຄຳຄິດຄຳເຫັນ, ສະໜອງບົດຕ່າງໆ ເພື່ອສ້າງເງື່ອນໄຂໃຫ້ໜັງສືພິມ " **ຜູ້ແທນປະຊາຊົນ** " ກໍຄືພາຫະນະສື່ມວນຊົນທີ່ເປັນກະບອກສຽງຂອງສະພາແຫ່ງຊາດໄດ້ຮັບການປັບປຸງ ແລະ ພັດທະນາຂຶ້ນເລື້ອຍໆ ສາມາດຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນແຕ່ລະໄລຍະ ກໍຄືການເຮັດໜ້າທີ່ໂຄສະນາແນວທາງນະໂຍບາຍຂອງພັກ, ແຜນນະໂຍບາຍ ແລະ ກົດໝາຍຂອງລັດ, ໂຄສະນາເຜີຍແຜ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ໂດຍຕິດພັນພາລະບົດບາດຂອງສະພາແຫ່ງຊາດ ຄື: ນິຕິບັນຍັດ, ການຕົກລົງບັນຫາສຳຄັນພື້ນຖານຂອງຊາດ ແລະ ຕິດຕາມກວດກາ.

ເນື່ອງໃນໂອກາດປີໃໝ່ສາກົນ 2023 ນີ້, ໃນນາມຄະນະບັນນາທິການ ຂໍອວຍພອນໄຊອັນປະເສີດ ແລະ ສະແດງຄວາມຂອບໃຈຢ່າງຈິງໃຈມາຍັງການນຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ, ພະນັກງານ ກໍຄືບັນດາຜູ້ອ່ານທຸກໆທ່ານທີ່ໃຫ້ກຳລັງໃຈແກ່ຄະນະຈັດທຳຕະຫຼອດມາ.

**ຄະນະບັນນາທິການ**




# ຈີນ ຈະປັບປຸງມາດຕະການປ້ອງກັນ ແລະ ຄວບຄຸມພະຍາດຢ່າງບໍ່ຢຸດຢັ້ງ

ອີງຕາມການລາຍງານຂ່າວ ໃຫ້ຮູ້ວ່າ: ເວລາຕອບຄຳຖາມນັກຂ່າວໃນກອງປະຊຸມຖະແຫຼງຂ່າວ ທີ່ຈັດຂຶ້ນໃນວັນທີ 3 ມັງກອນນີ້, ທ່ານ ນາງ ໝາວໜິງ ໂຄສົກກະຊວງການຕ່າງປະເທດຈີນ ໄດ້ຊີ້ໃຫ້ເຫັນວ່າ: ຝ່າຍຈີນຈະສືບຕໍ່ປັບປຸງມາດຕະການປ້ອງກັນ ແລະ ຄວບຄຸມພະຍາດ ໂດຍອີງຕາມສະຖານະການແຜ່ລະບາດຂອງພະຍາດໂຄວິດ-19, ເພື່ອສ້າງເງື່ອນໄຂທີ່ດີກວ່າເກົ່າໃຫ້ແກ່ການໄປມາຫາສູ່ກັນທີ່ປອດໄພ, ປອດໃສ ແລະ ມີຄວາມເປັນລະບຽບຮຽບຮ້ອຍຂອງປະຊາຊົນທັງພາຍໃນ ແລະ ຕ່າງປະເທດ, ຮັບປະກັນການແລກປ່ຽນ ແລະ ການຮ່ວມມືກັບພາຍນອກໃຫ້ດີກວ່າເກົ່າ.



ເມື່ອບໍ່ດົນມານີ້, ຝ່າຍຈີນໄດ້ປະກາດປະຕິບັດການຄຸ້ມຄອງລະດັບ ຂ ສຳລັບພະຍາດປະເພດ ຂ ຕໍ່ການຕິດເຊື້ອພະຍາດໂຄວິດ-19 ພ້ອມທັງອອກນະໂຍບາຍຊົ່ວຄາວສຳລັບການໄປມາຫາສູ່ກັນລະຫວ່າງປະຊາຊົນພາຍໃນ ແລະ ຕ່າງປະເທດ. ຈາກນັ້ນມາ ແມ່ນມີຫຼາຍປະເທດໄດ້ສະແດງຄວາມຍິນດີຕໍ່ນະໂຍບາຍດັ່ງກ່າວ, ແຕ່ກໍເລີ່ມມີບາງປະເທດໄດ້ປະກາດນຳໃຊ້ມາດຕະການປ້ອງກັນ ແລະ ຄວບຄຸມພະຍາດຊົ່ວຄາວສຳລັບຜູ້ເດີນທາງຈາກຈີນເມື່ອຫວ່າງບໍ່ເທົ່າໃດມື້ຜ່ານມາ, ລວມທັງການກວດຫາເຊື້ອພາຍຫຼັງເຂົ້າປະເທດ, ນຳໃຊ້ມາດຕະການກັກບໍລິເວນສຳລັບຜູ້ທີ່ຕິດເຊື້ອ ແລະ ອື່ນໆ. ຕໍ່ກັບກໍລະນີດັ່ງກ່າວ, ທ່ານ ນາງ ໝາວໜິງ ກ່າວວ່າ: ຫວ່າງມໍ່ໆມານີ້ໄດ້ມີຜູ້ຊ່ຽວຊານດ້ານອະນາໄມ ແລະ ສຸຂະພາບຂອງຫຼາຍປະເທດໃຫ້ຮູ້ວ່າ, ເຊື້ອພະຍາດໂຄວິດ-19 ທີ່ພວມແຜ່ລະບາດຢູ່ຈີນນັ້ນ ເຄີຍແຜ່ລະບາດຢູ່ບ່ອນຕ່າງໆໃນທົ່ວໂລກມາກ່ອນໜ້ານີ້ແລ້ວ ເຊິ່ງຢູ່ບ່ອນຕ່າງໆກໍອາດຈະເກີດເຊື້ອພະຍາດສາຍພັນໃໝ່ໄດ້ ສະນັ້ນ, ບໍ່ຈຳເປັນນຳໃຊ້ມາດຕະການຈຳກັດການເຂົ້າປະເທດເປັນພິເສດທີ່ແນໃສ່ຈີນ. ຝ່າຍຈີນມີທັດສະນະຢ່າງສະເໝີຕົ້ນສະເໝີປາຍວ່າ ມາດຕະການປ້ອງກັນ ແລະ ຄວບຄຸມພະຍາດຂອງປະເທດຕ່າງໆ ຄວນອີງຕາມຫຼັກວິທະຍາສາດ ແລະ ມີລະດັບທີ່ເໝາະສົມ ບໍ່ຄວນສວຍໃຊ້ໂອກາດສ້າງໃຫ້ເປັນບັນຫາການເມືອງ ບໍ່ຄວນມີການປະພຶດທີ່ຈຳແນກ ແລະ ບໍ່ຄວນສ້າງຜົນກະທົບຕໍ່ການໄປມາຫາສູ່ກັນ ກໍຄືການແລກປ່ຽນ ແລະ ການຮ່ວມມືທີ່ເປັນປົກກະຕິລະຫວ່າງປະຊາຊົນ.

ແຫຼ່ງຂ່າວ: CRI

# ສະຫະພາບເອີຣົບ ຕິຕຽນຮ່າງກົດໝາຍ ວ່າດ້ວຍການຫຼຸດຜ່ອນໄພເງິນເຟີ້ຂອງອາເມລິກາ

**ຕາມການລາຍງານຂ່າວໃນວັນທີ 2 ມັງກອນ 2023 ໃຫ້ຮູ້ວ່າ: ທ່ານ ໂຈສ ໂບເຣັນ ຜູ້ຕາງໜ້າລະດັບສູງກ່ຽວກັບນະໂຍບາຍການຕ່າງປະເທດ ແລະ ຄວາມໝັ້ນຄົງສະຫະພາບເອີຣົບ ໄດ້ເຜີຍແຜ່ບົດຄວາມ ໂດຍໄດ້ຕິຕຽນຮ່າງກົດໝາຍວ່າດ້ວຍການຫຼຸດຜ່ອນໄພເງິນເຟີ້ຂອງອາເມລິກາ. ບົດຄວາມດັ່ງກ່າວລະບຸວ່າ: ຮ່າງກົດໝາຍສະບັບນີ້ຈະໃຫ້ເງິນອຸດໜູນສາທາລະນະແກ່ບໍລິສັດທີ່ດຳເນີນການຜະລິດຢູ່ອາເມລິກາ ເຊິ່ງການກະທຳແບບນີ້ ຈະທຳລາຍຜົນປະໂຫຍດຂອງວິສາຫະກິດເອີຣົບ ບໍ່ເຄົາລົບກະຕິກາຂອງອົງການການຄ້າໂລກ.**

ເນື້ອໃນບົດຄວາມຂອງທ່ານ ໂຈສ ໂບເຣັນ ຍັງລະບຸຕື່ມວ່າ: ລັດຖະບານອາເມລິກາ ຫວັງຢາກຜ່ານຮ່າງກົດໝາຍວ່າດ້ວຍການຫຼຸດຜ່ອນໄພເງິນເຟີ້ ເພື່ອເລັ່ງລັດການຫັນປ່ຽນຮູບແບບຂອງພະລັງງານ, ແຕ່ແນວຄວາມຄິດຂອງຮ່າງກົດໝາຍສະບັບນີ້ ໄດ້ຝ່າຝືນກັບຫຼັກໝັ້ນຂອງສະຫະພາບເອີຣົບ, ຈະທຳລາຍເສດຖະກິດໂລກ ດັ່ງນັ້ນ, ສະຫະພາບເອີຣົບຄັດຄ້ານການກະທຳທີ່ໃຫ້ເງິນອຸດໜູນສາທາລະນະຂອງອາເມລິກາ.

ທ່ານ ໂຈສ ໂບເຣັນ ຂຽນຕື່ມວ່າ: ຄວາມສາມາດດ້ານການເງິນຂອງສະຫະພາບເອີຣົບ ມີຄວາມຈຳກັດ ການທີ່ໃຊ້ນະໂຍບາຍທີ່ຄືກັນກັບອາເມລິກາໃນປະເທດສະມາຊິກຕ່າງໆ ຈະແບ່ງແຍກຕະຫຼາດພາຍໃນຂອງສະຫະພາບເອີຣົບ. ສະຫະພາບເອີຣົບພວມສົນທະນາກັບລັດຖະບານອາເມລິກາ ເພື່ອແກ້ໄຂຄວາມຂັດແຍ່ງ.

ແຫຼ່ງຂ່າວ : CRI

## ຖະແຫຼງຂ່າວ ການດຳເນີນກອງປະຊຸມ...

( ຕໍ່ຈາກໜ້າ 5 )

ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານ ປະຈຳປີ 2021 ຂອງນະຄອນຫຼວງວຽງຈັນ; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງອົງການກວດກາລັດນະຄອນຫຼວງວຽງຈັນ ບົດລາຍງານຜົນການກວດກາຕາມຜົນການກວດສອບ ປະຈຳປີ 2018; ຮັບຟັງການລາຍງານການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດຄື: ວາລະແຫ່ງຊາດວ່າດ້ວຍການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ປະຈຳປີ 2022 ຢູ່ນະຄອນຫຼວງວຽງຈັນ ແລະ ວາລະແຫ່ງຊາດວ່າດ້ວຍການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ປະຈຳປີ 2022 ຢູ່ນະຄອນຫຼວງວຽງຈັນ.

ພ້ອມນັ້ນ, ຍັງຈະໄດ້ພິຈາລະນາ ແລະ ຮັບຮອງເອົາການສ້າງນິຕິກຳໃຕ້ກົດໝາຍຂອງນະຄອນຫຼວງ ຈຳນວນ 2 ສະບັບຄື: ຮ່າງຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດມາດຕະການສ້າງນະຄອນຫຼວງວຽງຈັນສະອາດ (ສ. ສະອາດ) ແລະ ຮ່າງແຜນຈັດສັນທີ່ດິນຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຮອບດ້ານຂອງນະຄອນຫຼວງວຽງຈັນ ; ຄົ້ນຄວ້າ, ປະກອບຄຳຄິດຄຳເຫັນໃສ່ຮ່າງລັດຖະບັນຍັດຂອງປະທານປະເທດຈຳນວນ 2 ສະບັບຄື: ຮ່າງລັດຖະບັນຍັດຂອງປະທານປະເທດແຫ່ງ ສປປ ລາວ ວ່າດ້ວຍນະຄອນຫຼວງ ແລະ ຮ່າງລັດຖະບັນຍັດຂອງປະທານປະເທດແຫ່ງ ສປປ ລາວ ວ່າດ້ວຍອາກອນຕົວເມືອງ (City Tax); ຮັບຟັງການລາຍງານຂອງອົງການປົກຄອງ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດບັນດານິຕິກຳໃຕ້ກົດໝາຍທີ່ ສປນ ໄດ້ຮັບຮອງເອົາຈຳນວນ 2 ສະບັບ ຄື: ຂໍ້ຕົກລົງວ່າດ້ວຍການສ້າງນະຄອນຫຼວງວຽງຈັນສີຂຽວ (ສ.ສີຂຽວ) ແລະ ຂໍ້ຕົກລົງວ່າດ້ວຍນະຄອນຫຼວງວຽງຈັນສະຫງົບສຸກ (ສ.ສະຫງົບ). (ໃນນັ້ນ ລວມທັງການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍມາດຕະການຫຼຸດຜ່ອນອຸບັດເຫດ ແລະ ການຮັກສາຄວາມປອດໄພຕາມທ້ອງຖະໜົນທົ່ວນະຄອນຫຼວງວຽງຈັນ ສະບັບເລກທີ 1323/ຈນວ, ລົງວັນທີ 21 ທັນວາ 2018) ; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງອົງການໄອຍະການປະຊາຊົນພາກກາງ ແລະ ອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023 ຂອງສານປະຊາຊົນພາກກາງ ແລະ ສານປະຊາຊົນນະຄອນຫຼວງວຽງຈັນ; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ II; ຮັບຟັງບົດປະກອບຄຳເຫັນຂອງອົງການແນວລາວສ້າງຊາດນະຄອນຫຼວງວຽງຈັນ ຕໍ່ການເຄື່ອນໄຫວວຽກງານຂອງ ສປນວ; ພິຈາລະນາໃຫ້ຄະແນນປະເມີນຜົນຕໍ່ການປະຕິບັດໜ້າທີ່ຂອງບຸກຄະລາກອນທີ່ ສປນວ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ.

ກອງປະຊຸມ ຍັງຈະໄດ້ຮັບຟັງການຊີ້ແຈງບາງບັນຫາພົ້ນເດັ່ນທີ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນນະຄອນຫຼວງຍົກຂຶ້ນ ຫຼື ຊັກຖາມໃນກອງປະຊຸມຈາກອົງການປົກຄອງ, ສານປະຊາຊົນ, ໄອຍະການປະຊາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງຕື່ມອີກ.

ດັ່ງນັ້ນ, ຈຶ່ງຂໍເຊີນຊວນບັນດາອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງສັງຄົມທຸກພາກສ່ວນ, ພະນັກງານ, ທະຫານ, ຕຳຫຼວດ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າໃນທົ່ວປະເທດ ໂດຍສະເພາະຊາວນະຄອນຫຼວງວຽງຈັນ ຈົ່ງໃຫ້ການຕິດຕາມຂ່າວສານທາງໂທລະພາບ, ວິທະຍຸກະຈາຍສຽງ, ສື່ສິ່ງພິມຕ່າງໆ ແລະ ສາມາດມີຄຳຄິດຄຳເຫັນ ຫຼື ຄຳສະເໜີຜ່ານທາງໂທລະສັບສາຍດ່ວນ ໝາຍເລກ 1156 ຫຼື ໝາຍເລກໂທລະສັບ 021 260242 ເຊິ່ງເລີ່ມເປີດຮັບຄຳສະເໜີ, ຄຳຄິດຄຳເຫັນຕໍ່ກອງປະຊຸມນັບແຕ່ມື້ນີ້ເປັນຕົ້ນໄປ.

## ສພຊ ປາຖະກະຖາ...

( ຕໍ່ຈາກໜ້າ 1 )

ວັນຊາດທີ 2 ທັນວາ 1975 ຄົບຮອບ 47 ປີ ແລະ ປາຖະກະຖາວັນຄ້າຍວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 102 ປີ ຈາກ**ສະຫາຍ ສົມສະຫວາດ ເລັ່ງສະຫວັດ** ອະດີດກຳມະການ ກົມການເມືອງສູນກາງພັກ, ອະດີດຮອງນາຍົກລັດຖະມົນຕີ; ມີສະຫາຍ ຄຳໃບ ດຳລັດ ກຳມະການສູນກາງພັກ, ສະຫາຍຄະນະປະຈຳ, ປະທານ-ຮອງປະທານກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ສະມາຊິກພັກພາຍໃນສະພາແຫ່ງຊາດເຂົ້າຮ່ວມ.

ໃນພິທີ, ສະຫາຍ ສົມສະຫວາດ ເລັ່ງສະຫວັດ ໄດ້ປາຖະກະຖາເລົ່າຄືນມູນເຊື້ອ ແລະ ຄວາມໝາຍຄວາມສຳຄັນຂອງວັນຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວັນທີ 2 ທັນວາ (2/12/1975-2/12/2022) ຄົບຮອບ 47 ປີ ແລະ ປາຖະກະຖາວັນຄ້າຍວັນເກີດປະທານ ໄກສອນ ພົມວິຫານ (13/12/1920-13/12/2022) ຄົບຮອບ 102 ປີ ເຊິ່ງທ່ານໄດ້ເລົ່າຄືນກ່ຽວກັບຊີວິດ ແລະ ການເຄື່ອນໄຫວປະຕິວັດ, ຜົນງານ ແລະ ຄຸນງາມຄວາມດີຂອງປະທານ ໄກສອນ ພົມວິຫານ.

ໃນຕອນບ່າຍຂອງວັນດຽວກັນ, ສະຫາຍ ຄຳໃບ ດຳລັດ ໄດ້ສືບຕໍ່ເຜີຍແຜ່ມະຕິຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 5 ສະໄໝທີ XI ແລະ ເຜີຍແຜ່ມະຕິວ່າດ້ວຍວຽກງານການເມືອງ-ແນວຄິດທົ່ວປະເທດ ຄັ້ງທີ 5. ໃນໂອກາດດັ່ງກ່າວ ກອງປະຊຸມຍັງໄດ້ຮັບຟັງການປະກາດແຕ່ງຕັ້ງຕຳແໜ່ງບໍລິຫານພາຍໃນສະພາແຫ່ງຊາດ ຈາກສະຫາຍ ສົງຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດ ເຊິ່ງຕຳແໜ່ງບໍລິຫານປະເພດ 3 ມີ 1 ສະຫາຍ ແລະ ຕຳແໜ່ງບໍລິຫານປະເພດ 5 ມີ 4 ສະຫາຍ; ຈາກນັ້ນ, ສະຫາຍ ນາງ ປິ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ເລຂາທິການສະພາແຫ່ງຊາດ ໄດ້ມອບມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການແຕ່ງຕັ້ງຕຳແໜ່ງບໍລິຫານພາຍໃນສະພາແຫ່ງຊາດ; ພ້ອມນັ້ນ, ຍັງໄດ້ມີການທາບທາມບຸກຄະລາກອນເຂົ້າໃນແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ທີ່ຂຶ້ນກັບສິດຄຸ້ມຄອງຂອງຄະນະບໍລິຫານງານພັກສະພາແຫ່ງຊາດ ຮອບທີ 2.

**# ຂ່າວ: ນາງ ສຸພາວັນ ທອມສະນິດ**
**# ພາບ: ສ່ອນສັກ ວັນວິໄຊ**




# ເບິ່ງກົດໝາຍປົກປ້ອງສິດທິຂອງເດັກ

ຄໍລໍາແຮກພານ "ເບິ່ງໄວ້ໄດ້ບົດຮຽນ" ທີ່ເປີດໂຕໃນໜັງສືພິມຜູ້ແທນປະຊາຊົນສະບັບນີ້ ມີເປົ້າໝາຍສັນຫາມາເລົ່າ ກ່ຽວກັບບົດຮຽນຕ່າງປະເທດດ້ານນິຕິກໍາ, ມາດຕະການ, ນະໂຍບາຍ ແນວທາງທີ່ນໍາໃຊ້ເພື່ອຄຸ້ມຄອງລັດ ຄຸ້ມຄອງສັງຄົມ ແລະ ພັດທະນາເສດຖະກິດ ຢູ່ຕ່າງປະເທດເປົ້າໝາຍຈໍານວນໜຶ່ງ.

ສໍາລັບບົດນີ້, ຜູ້ຂຽນຄັດຈ້ອນເອົາບາງບົດຮຽນກ່ຽວກັບການປົກປ້ອງສິດທິຂອງເດັກນ້ອຍ ດ້ວຍມາດຕະການທາງກົດໝາຍ. ຢູ່ປະເທດກໍາປູເຈຍ, ບັນຫາທີ່ເຮັດໃຫ້ສັງຄົມປວດຫົວມາເປັນເວລາດົນນານນັ້ນ ກໍຄືການແຕ່ງດອງຂອງເດັກໃນເຍົາໄວ ດ້ວຍການບັງຄັບ ແລະ ການຖືພາຂອງແມ່ຍິງທີ່ຍັງບໍ່ທັນບັນລຸນິຕິພາວະ.

ເພື່ອແກ້ໄຂບັນຫາດັ່ງກ່າວ, ກະຊວງກິດຈະການສະຕີ (Ministry of Women's Affairs) ໄດ້ຮ່ວມມືກັບອົງການອຍນິເຊັບປະຈໍາກໍາປູເຈຍ ເປີດບໍລິການໂທລະສັບສາຍດ່ວນຂຶ້ນ 2 ຫົວໜ່ວຍຄື ຫົວໜ່ວຍທີ່ລົງເລິກກ່ຽວກັບການແຕ່ງດອງຂອງຄົນໃນໄວເດັກ ແລະ ຫົວໜ່ວຍຮັບຜິດຊອບຕິດຕາມການຖືພາຂອງເດັກຍິງ. ໜ່ວຍບໍລິການທັງສອງນີ້ ເຄື່ອນໄຫວພາຍໃຕ້ການຊີ້ນໍາຂອງກົມກົດໝາຍປະຈໍາກະຊວງກິດຈະກໍາສະຕີ. ໜ້າທີ່ຕົ້ນຕໍຂອງໜ່ວຍບໍລິການໂທລະສັບສາຍດ່ວນ ກໍຄືຊຸກຍູ້ໃຫ້ທົ່ວສັງຄົມເປັນຫູເປັນຕາ ລາຍງານກ່ຽວກັບບັນຫາເດັກທີ່ຕົກເປັນເຫຍື່ອການແຕ່ງດອງແບບບັງຄັບ ແລະ ການຖືພາຂອງເດັກຍິງ ໃຫ້ທາງກະຊວງ ແລະ ເຈົ້າໜ້າທີ່ກ່ຽວຂ້ອງຊາບຢ່າງທັນການ. ຂ່າວໃຫ້ຮູ້ຕື່ມວ່າ ໃນໄລຍະກວ່າ 2 ປີ ນັບແຕ່ໄດ້ເປີດບໍລິການສາຍດ່ວນດັ່ງກ່າວ, ທາງການກໍາປູເຈຍ ສາມາດຊ່ວຍເຫຼືອເດັກທີ່ຕົກເປັນເຫຍື່ອເຫດການທີ່ບໍ່ເພິ່ງປາຖະໜາໄດ້ເປັນຈໍານວນຫຼວງຫຼາຍ. ຢູ່ **ສປ ຈີນ** ທາງການຂອງປະເທດນີ້ ໄດ້ປະກາດໃຊ້ກົດໝາຍຕ້ານອາຊະຍາກໍາລ່ວງລະເມີດທາງເພດຕໍ່ເດັກນ້ອຍ ໃນທ້າຍປີ 2019. ກົດໝາຍສະບັບນີ້ ສ້າງຂຶ້ນເປັນພິເສດ ແລະ ໄດ້ກໍານົດໂທດສູງສຸດສໍາລັບອາຊະຍາກໍາດັ່ງກ່າວ. ສານປະຊາຊົນສູງສຸດຂອງ ສປ ຈີນ ໄດ້ປະກາດຈຸດຢືນຢ່າງຈະແຈ້ງກ່ຽວກັບຄະດີລະເມີດທາງເພດຕໍ່ເດັກວ່າ : " ບຸກຄົນທີ່ຂົ່ມຂືນເດັກນ້ອຍນັ້ນ ແມ່ນຄົນຊົ່ວໂດຍສັນດານ ເຊິ່ງຕ້ອງຖືກຕັດສິນປະຫານຊີວິດໂດຍບໍ່ມີການຜ່ອນຜັນ ".

ສານປະຊາຊົນສູງສຸດຈີນ ຖືອາຊະຍະກໍາທາງເພດຕໍ່ເດັກນ້ອຍເປັນຄະດີທີ່ສົ່ງຜົນເສຍຕໍ່ສຸຂະພາບທາງກາຍ ແລະ ຈິດໃຈຂອງເດັກຢ່າງຮ້າຍແຮງ ນອກນັ້ນ ຍັງເປັນການລະເມີດຈະລິຍະທໍາ ແລະ ສິລະທໍາທາງສັງຄົມອີກດ້ວຍ. ທີ່ **ສ ເກົາຫຼີ** ບັນຫາການລ່ວງລະເມີດທາງເພດຕໍ່ເດັກທີ່ມີອາຍຕໍ່າກວ່າ 12 ປີນັ້ນ ມີທ່າອ່ຽງເພີ່ມຂຶ້ນໃນຊຸມປີຫຼັງໆມານີ້ ໂດຍໄດ້ຍົກໃຫ້ເຫັນຈໍານວນຄະດີທີ່ເກີດຂຶ້ນແຕ່ປີ 2017 ຫາ 2019 ດັ່ງນີ້: ໃນປີ 2017 ຈໍານວນຄະດີມີທັງໝົດ 1.261 ເລື່ອງ, ໃນປີ 2018 ມີ 1.277 ເລື່ອງ ແລະ ໃນປີ 2019 ມີ 1.374 ເລື່ອງ. ການເພີ່ມຂຶ້ນຂອງຄະດີຂົ່ມຂືນເດັກດັ່ງກ່າວ ໄດ້ກໍ່ໃຫ້ເກີດມີກະແສວິພາກວິຈານວ່າ ບົດລົງໂທດທາງກົດໝາຍຕໍ່ຜູ້ລະເມີດນັ້ນເບົາບາງໂພດ. ເພື່ອຕອບສະໜອງຕາມຄວາມຮຽກຮ້ອງຂອງສັງຄົມ, ລັດຖະສະພາ ສ. ເກົາຫຼີ ຈຶ່ງໄດ້ພິຈາລະນາທົບທວນຄືນ ກົດໝາຍວ່າດ້ວຍການປົກປ້ອງເຍົາວະຊົນ (Children) ແລະ ໄວໜຸ່ມ (Juveniles) ຈາກການລະເມີດທາງເພດ ໂດຍໄດ້ເພີ່ມໂທດຕໍ່ຜູ້ຂົ່ມຂູ່ ແລະ ລົງມືລະເມີດທາງເພດຕໍ່ເດັກ ດ້ວຍການຈໍາຄຸກຈາກຕໍ່າສຸດ 5 ປີໃນເມື່ອກ່ອນ ມາເປັນຕໍ່າສຸດ 7 ປີ. ຢູ່**ປະເທດສິງກະໂປ** ໃນທ້າຍປີ 2020 ກໍໄດ້ມີການຕັດສິນຄະດີແມ່ຍິງອາຍຸ 44 ປີຄົນໜຶ່ງທີ່ໃຊ້ຄວາມຮຸນແຮງທໍາຮ້າຍຮ່າງກາຍລູກນ້າ ເປັນເວລາ 2 ປີ ດ້ວຍການຕົບຕີ ແລະ ໃຊ້ວັດຖຸແກວ່ງໃສ່ຈົນມີບາດແຜທົ່ວຕົນໂຕ. ນອກນັ້ນ ຍັງໃຊ້ວາຈາປ້ອຍດ່າລູກນ້າວ່າ " ລູກອີ່ກະຫຼີ່ " ຂ່າວບອກວ່າ ແມ່ນ້າໃຈຜີຄົນນີ້ ໄດ້ຈີກໃບຍ້ອງຍໍມາລະຍາດດີທີ່ທາງໂຮງຮຽນມອບໃຫ້ລູກນ້າ ພ້ອມທັງໄດ້ເວົ້າວ່າ : " ມຶງບໍ່ສົມຄວນໄດ້ໃບຍ້ອງຍໍນີ້ດອກ ! ". ກໍາຊົ່ວທີ່ແມ່ນ້າຄົນນີ້ກໍ່ຂຶ້ນນັ້ນ ໄດ້ສົ່ງນາງໄປນອນຢູ່ຄຸກເປັນເວລາ 4 ປີ ແລະ ຖືກປັບໃໝເປັນເງິນໃນມູນຄ່າ 4 ພັນໂດລາສະຫະລັດ.




## ຕ້ອງການເມຍ

ພາຍຫລັງນາງເມຍໄດ້ລ່ວງລັບໄປເປັນເວລາ 5 ປີ, ທ້າວພີເຕີ ໄດ້ລົງໄປປະກາດໃນໜ້າໜັງສືພິມ ໂດຍມີຫົວຂໍ້ວ່າ : " ຕ້ອງການເມຍ ". ຕະຫລອດ 2 ອາທິດຕໍ່ມາ ທ້າວພີເຕີໄດ້ຮັບຈົດໝາຍຊາບຕອບເປັນຈໍານວນຮ້ອຍໆກ່ານ, ທັງໝົດມາຈາກເພດຊາຍທີ່ບອກວ່າ :

" ເອົາເມຍເຮົາກໍ່ໄດ້ "

## Wanted Wife

Five years after the death of his wife, Peter advertised in a newspaper. " Wanted Wife. " In the course of two weeks, he received hundreds of replies, all from men saying " YOU CAN HAVE MINE. "

ທະນາຄານພັດທະນາລາວ
LDB Bank




ຂັບລົດເປັນ ບໍ່ໄດ້ຂັບຄົນ ນ້ອງຢ່າມາເສີບວ່າອ້າຍບໍ່ແດ!

● ໂດຍ : ສາວສົ້ນແຕ້ມ

**ຜູ້ຊີ້ນໍາ :**
ທ່ານ ສິງຄໍາ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄໍາວິສັນ ແກ້ວສຸວັນ

**ຄະນະບັນນາທິການ :**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄໍາ ລໍຄໍາສອນ ຮອງ ບກ

**ກອງບັນນາທິການ :**
ນາງ ກົງໃຈ ແສງອໍາພັນ
ນາງ ສຸພາວັນ ທອມສະນິດ
ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :**
ທ່ານ ຄໍາຫວັນ ດາລາວົງ
ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ